3.2 ຂໍ້ສະເໜີຈາກບໍລິສັດນ້ຳປະປາລາວຕໍ່ການຮ້ອງຟ້ອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນະຄອນຫຼວງວຽງຈັນ
ລັດວິສາຫະກິດນ້ຳປະປານະຄອນຫຼວງ

ເລກທີ_____/ນປນຄ
ວຽງຈັນ,ວັນທີ_____

ໃບແຈ້ງການ

ຜູ້ອຳນວຍການລັດວິສາຫະກິດ ນ້ຳປະປານະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງບັນດາ ທ່ານ ຜູ້ຊົມໃຊ້ນ້ຳປະປາພາຍໃນນະຄອນຫຼວງວຽງຈັນ ຊາບທົ່ວເຖິງກັນວ່າ ມາຮອດປະຈຸບັນນີ້ ໂຮງງານ ຜະລິດນ້ຳປະປາໃຫຍ່ທັງສອງແຫ່ງ ເຊັ່ນ: ໂຮງງານຜະລິດນ້ຳປະປາເກົ້າລ້ຽວ ສາມາດຜະລິດນ້ຳປະປາ ໄດ້ 20,000 ມ^3/ມື້ ແລະ ໂຮງງານຜະລິດນ້ຳປະປາຈືນາຍໂມ ສາມາດຜະລິດນ້ຳປະປາ 80,000 ມ^3/ມື້, ແມ່ນຜະລິດນ້ຳເຕັມອັດຕາຄວາມສາມາດຂອງທັງສອງໂຮງງານແລ້ວ, ແຕ່ກໍ່ບໍ່ສາມາດບໍລິການຕອບສະ ໜອງນ້ຳໃຫ້ພຽງພໍກັບຄວາມຕ້ອງການຂອງ ຜູ້ຊົມໃຊ້ນ້ຳບາງເຂດຢູ່ຊານເມືອງ ຂອງນະຄອນຫຼວງວຽງ ຈັນໄດ້ກໍ່ຍ້ອນວ່າ ອັດຕາການເພີ່ມຂຶ້ນຂອງປະຊາກອນ ແລະ ການຂະຫຍາຍຕົວຂອງຕົວເມືອງແມ່ນ ເພີ່ມຂຶ້ນຢ່າງໄວວາ. ຕາມແຜນການຜະລິດແລ້ວ ທັງສອງໂຮງງານແມ່ນສາມາດສະໜອງນ້ຳໄດ້ຮອດ ປີ 1999 ແລະ ປີ 2000 ຕ້ອງໄດ້ກໍ່ສ້າງໂຮງງານຜະລິດນ້ຳໃໝ່ເພີ່ມຂຶ້ນຕື່ມໜຶ່ງແຫ່ງ. ແຕ່ຫຍ້ອນການ ຂາດເຂີນທຶນຮອນທີ່ຈະມາລົງທຶນກໍ່ສ້າງ ຈຶ່ງເກີດບັນຫາການຂາດແຄນນ້ຳນີ້.

ອີງຕາມແຜນການໆສຶກສາຄົ້ນຄ້ວາຂອງອົງການ JICA STUDY TEAM ຊຶ່ງກຳລັງສຶກສາຄົ້ນ ຄ້ວາຄວາມເປັນໄປໄດ້ ໃນການກໍ່ສ້າງແລະຂະຫຍາຍໂຮງງານຜະລິດນ້ຳປະປາໃໝ່ເພີ່ມຂຶ້ນນີ້ວ່າ ຖ້າວ່າ ໄດ້ຮັບທຶນຊ່ວຍເຫຼືອລ້າຈາກລັດທະບານຍີ່ປຸ່ນ ໂຄງການກໍ່ສ້າງດັ່ງກ່າວໄລຍະໜຶ່ງ ແມ່ນຈະໄດ້ຂະຫຍາຍ ໂຮງງານຜະລິດນ້ຳປະປາເກົ້າລ້ຽວເພີ່ມຂຶ້ນຈາກ 20,000 ມ^3/ມື້ ອີກ 40,000 ມ^3/ມື້ ລວມເປັນ 60,000 ມ^3/ມື້, ປັບປຸງແລະສ້ອມແປງໂຮງງານຜະລິດນ້ຳປະປາເກົ້າລ້ຽວເກົ່າ 20,000 ມ^3/ມື້, ປັບປຸງ ໂຮງງານຜະລິດນ້ຳປະປາຈືນາຍໂມ 80,000 ມ^3/ມື້ ຄືກໍ່ສ້າງອ່າງເກັບນ້ຳໃຕ້ດິນອີກ 10,000 ມ^3, ພ້ອມ ທັງຕິດຕັ້ງໂປມສູບສົ່ງນ້ຳເຂົ້າເມືອງ, ແຍກທໍ່ສົ່ງນ້ຳເຂົ້າເມືອງ ແລະ ວາງທໍ່ສົ່ງແມ່ເອົານ້ຳຂຶ້ນອ່າງເກັບນ້ຳ ສູງຕ່າງໆ ອອກຕ່າງຫາກ, ປັບປຸງແລະສ້ອມແປງໂປມສູບສົ່ງຢູ່ຫຼັກ 6, ວາງທໍ່ສົ່ງແມ່ 2.2 ກມ ແລະ ວາງ ທໍ່ແຈກທີ່ຈຳເປັນ 15.2 ກມ ຕື່ມ. ໂຄງການດັ່ງກ່າວຈະສຳເລັດແລະນຳໃຊ້ທ້າຍປີ 2007 ແລະໄລຍະ ສອງ ແມ່ນກໍ່ສ້າງໂຮງງານຜະລິດນ້ຳປະປາໃໝ່ 50,000 ມ^3/ມື້ ຢູ່ ທ່າງ່ອນ ຈະສຳເລັດໃນປີ 2012.

ໃນໄລຍະໜຶ່ງ ຖ້າໂຄງການກໍ່ສ້າງແລະຂະຫຍາຍໂຮງງານນ້ຳປະປາເກົ່າລ້ຽວສຳເລັດທ້າຍປີ 2007 ຈຶ່ງ ສາມາດບໍລິການສະໜອງນ້ຳປະປາໃຫ້ພຽງພໍກັບຄວາມຕ້ອງການຂອງ ຜູ້ຊົມໃຊ້ນ້ຳໄດ້ຮອດປີ 2012. ໃນໄລຍະລໍຖ້າແຕ່ນີ້ຫາປີ 2007 ບໍລິມາດການຜະລິດນ້ຳປະປາບໍ່ສາມາດເພີ່ມຂຶ້ນໄດ້ອີກ ເພາະການຜະ ລິດນ້ຳໃນປະຈຸບັນໄດ້ເຖິງຂີດຄວາມສາມາດຜະລິດສູງສຸດແລ້ວ, ມີແຕ່ການກໍ່ສ້າງໂຮງງານຜະລິດນ້ຳ ປະປາໃໝ່ ຫຼືຂະຫຍາຍໂຮງງານເກົ່າເທົ່ານັ້ນ ຈຶ່ງສາມາດເພີ່ມການສະໜອງ ນ້ຳໃຫ້ຜູ້ຊົມໃຊ້ໄດ້ຢ່າງ ພຽງພໍ.

ດັ່ງນັ້ນ, ການບໍລິການແລະການຊົມໃຊ້ນ້ຳປະປາໃນໄລຍະນີ້ ຕ້ອງມີມາດຕະການອັນເໝາະສົມ ເພື່ອປະຫຍັດນ້ຳໃຫ້ພໍມີນ້ຳຮັບໃຊ້ປະຈຳວັນດັ່ງນີ້:

15. ລັດວິສາຫະກິດນ້ຳປະປານະຄອນຫຼວງຈະໄດ້ຈຳກັດຫຼຸດຜ່ອນນ້ຳສູນເສຍ, ນ້ຳຮົ່ວໄຫຼຕາມສາຍທໍ່ ຕ່າງໆ.
    - ປ່ຽນຖ່າຍລະບົບທໍ່ທີ່ເກົ່າແກ່.
    - ປ່ຽນຖ່າຍໝໍ້ແທກນ້ຳທີ່ເກົ່າແກ່ ແລະ ເປ່ເພ.
    - ບໍລິການສິ່ງນ້ຳທາງລິດ.
2. ບັນດາທ່ານ ຜູ້ຊົມໃຊ້ນ້ຳປະປາຄົວເຮືອນ, ສຳນັກງານ ອົງການລັດ, ກະຊວງທະບວງກົມ, ຫໍພັກ ມະຫາວິທະຍາໄລ, ໂຮງຮຽນ, ໂຮງໝໍ, ໂຮງແຮມ, ໂຮງງານແລະອື່ນໆ ຕ້ອງມີການຄວບຄຸມ ການ ໃຊ້ນ້ຳຢ່າງປະຢັດ, ບ່ຳຟຸມເຟືອຍແລະປ່ອຍໃຫ້ນ້ຳຮົ່ວໄຫຼໂດຍບ່ໄດ້ນຳໃຊ້. ຕ້ອງໄດ້ກໍ່ສ້າງອ່າງເກັບ ນ້ຳໜ້າດິນ, ແລ້ວແຕ່ຂະໜາດທີ່ເໝາະສົມ ເພື່ອໂຕ່ງນ້ຳໄວ້ເວລາມີນ້ຳໄຫຼໃຫ້ມີນ້ຳຮັບໃຊ້ເວລາ ຂາດແຄນນ້ຳ. ສ້ອມແປງນ້ຳແຕກ ນ້ຳຮົ່ວພາຍໃນ (ຫຼັງໝໍ້ແທກນ້ຳເຂົ້າໄປໃນບ້ານ) ຫ້າມໃຊ້ ໂປມສູບນ້ຳໂດຍກົງຈາກທໍ່ນ້ຳປະປາ, ໃຫ້ປ່ອຍນ້ຳລົງອ່າງແລ້ວຈຶ່ງໃຊ້ໂປມດູດນ້ຳໄດ້ ເພື່ອຫຼີກ ເວັ້ນບັນຫາຂາດແຄນນ້ຳໃນເຂດນັ້ນໆ ໃນເວລາສູບນ້ຳ.

4. ໂຄງສ້າງລາຄານ້ຳໃນສະພາບປະຈຸບັນ

4.1 ໂຄງສ້າງລາຄານ້ຳໃນສະພາບປະຈຸບັນ

- ການກະທົບກ່ຽວກັບລາຄານ້ຳຕໍ່ກັບການນຳໃຊ້ນ້ຳຢ່າງປະຢັດ.

ລາຄານ້ຳແມ່ນມູນຄ່າດັດສົມການເຄື່ອນໄຫວຕົ້ນທຶນແລະລາຍຈ່າຍ -ລາຍຮັບຂອງວິສາຫະກິດ ເຊິ່ງມັນມີການກະທົບຕໍ່ການເຄື່ອນໄຫວທຸລະກິດ, ສັງຄົມ ແລະພື້ນຖານເສດຖະກິດຂອງລັດ ເວົ້າລວມ,ແລະເວົ້າສະເພາະມີການກະທົບຕໍ່ການນຳໃຊ້ນ້ຳ,ເມື່ອໆຈາກລາຄານ້ຳຖືກຜູ້ຊົມໃຊ້ນ້ຳ ມີຄວາມສາມາດຈ່າຍ ແລະບ່ຄຳນຶງເຖິງ ການໃຊ້ນ້ຳຢ່າງປະຢັດ.ສະນັ້ນຕ້ອງໄດ້ທົບທວນເບິ່ງລາ

ຄານ້ຳຜ່ານມາ.

❖ ສະຖິຕິການປະຕິບັດລາຄານ້ຳໃນໄລຍະ10ປີ (1994 - 2003)

ການປະຕິບັດລາຄານ້ຳແຕ່ລະໄລຍະ	ລາຄາສະເລ່ຍ ກີບ / m^3
1 /1994 - 3 / 1995	92
4 / 1995 - 6 / 1996	135
7 / 1996 - 5 / 1998	162
6 / 1998 - 3 / 2001	195
4 / 2001 - 10 / 2001	387
11 / 2001 - ປະຈຸບັນ	550

❖ ໂຄງສ້າງລາຄານ້ຳປະຈຸບັນ ສະເລ່ຍ 550 ກີບ / ມ^3

ປະເພດ	ເນື້ອໃນກຸ່ມລູກຄ້າຜູ້ນຳໃຊ້ນ້ຳ	ຂອບເຂດການນຳໃຊ້ (ມ^3 / ເດືອນ)	ລາຄາ (ກີບ / ມ^3)
I	ຄົວເຮືອນແລະສຳນັກງານບໍລິຫານຂອງລັດ	0 - 5 6 - 20 21 - 50 > 50	219 263 329 383
II	ການຄ້າແລະທຸລະກິດທົ່ວໄປ	0 - 5 6 - 20 21 - 50 > 50	549 602 636 670
III	ທຸລະກິດທີ່ນຳໃຊ້ນ້ຳເປັນວັດຖຸດິບ	0 - 50 51 - 100 >100	855 1 216 1 360
IV	ສະຖານທູດແລະບຸກຄົນຕ່າງປະເທດ	0 - 10 >10	6184 7668

❖ ປະເພດລູກຄ້າ: ການແຍກປະເພດລູກຄ້າ ແມ່ນອີງໃສ່ ປະເພດທີ່ມີລາຍຮັບແຕກຕ່າງກັນ.

➢ ປະເພດ I. ຄົວເຮືອນ ແລະ ສຳນັກງານບໍລິຫານຂອງລັດ = ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນທົ່ວໄປ, ອົງການຂອງລັດ (ລາຍບຸກຄົນ ແລະ ລວມໝູ່)

- ປະເພດ II. ພາກສ່ວນທີ່ທຳການຄ້າແລະທຸລະກິດທົ່ວໄປ = ວິສາຫະກິດຂອງລັດ, ເອກະຊົນ, ໂຮງງານ, ແລະຜູ້ມີອາຊີບຄ້າຂາຍທົ່ວໄປ
- ປະເພດ III. ວຽກງານທຸລະກິດ,ການຄ້າທີ່ໃຊ້ນ້ຳເປັນວັດຖຸດິບ = ໂຮງງານເບຍ,ນ້ຳກ້ອນ, ນ້ຳຫວານ, ໂຮງແຮມ, ເຮືອນພັກ, ສະລອຍນ້ຳ, ຮ້ານກິນດື່ມ...
- ປະເພດທີ່ IV. ສະຖານທູດ,ບຸກຄົນຕ່າງປະເທດ = ອົງການທູດ, ອົງການສາກົນ, ບໍລິສັດຕ່າງປະເທດ,ເຮືອນພັກບຸກຄົນຕ່າງປະເທດ.

4.2 ການສົມທຽບລາຄານ້ຳປະປາກັບຕົວເມືອງອື່ນໆ

ການສົມທຽບລາຄານ້ຳ ກັບບັນດາປະເທດຕ່າງໆ (ອີງຕາມຂໍ້ມູນຂອງJICA Study Team) ອີງຕາມຂໍ້ມູນຂອງ(JICA) ກ່ຽວກັບລາຄານ້ຳ ຢູ່ວຽງຈັນ ທຽບໃສ່ບັນດາປະເທດຕ່າງໆ ຢູ່ໃນ ເອເຊຍ.ເຫັນວ່າລາຄານ້ຳຕ່ຳຫຼາຍທຸກປະເພດລູກຄ້າ.

4.3 ຄຳເຫັນຂອງລູກຄ້າຕໍ່ກັບລາຄານ້ຳ:

- **ສຳລັບລູກຄ້າທຸລະກິດ ມີຄຳເຫັນວ່າ**

ລາຄານ້ຳປະປາແມ່ນເໝາະສົມ,ແລະເຂົ້າເຈົ້າກໍ່ມີການດູແລປະຢັດການນຳໃຊ້ເໝືອນກັນ,ເນື່ອງຈາກວ່າຖ້າໃຊ້ນ້ຳຫຼາຍກໍ່ຕ້ອງຈ່າຍຫຼາຍ,ຖ້າມີການປະຢັດກໍ່ຈ່າຍນ້ອຍ.

- **ສຳລັບລູກຄ້າປະເພດຄົວເຮືອນມີຄຳເຫັນວ່າ:**

ລາຄານ້ຳແມ່ນຕ່ຳ ທຽບ ໃສ່ໄຟຟ້າ.ເພາະວ່າການນຳໃຊ້ນ້ຳໃນຄອບຄົວທີ່ມີຈຳນວນພົນສະເລ່ຍ 6 ຄົນ, ໃຊ້ແຕ່ງຢູ່ຄົວກິນ, ຊັກເຄື່ອງຂອງ, ຫົດອາບໄມ້, ລ້າງລົດຕ່າງໆ.ລາຍຈ່າຍຄ່ານ້ຳພຽງແຕ່ 10 000 - 15 000 ກີບ/ເດືອນ ເທົ່ານັ້ນ.ກົງກັນຂ້າມຄ່າໄຟຕ້ອງຈ່າຍ150 000 - 200 000 ກີບ/ເດືອນ.ບາງບຸກຄົນເຫັນລາຄານ້ຳຕ່ຳຢູ່ທ່ຽງນຳໃຊ້,ນຳໃຊ້ແບບບໍ່ມີການປະຢັດ. ສຳລັບບາງເຂດທີ່ແຮງດັນນ້ຳຕ່ຳ ການສະໜອງນ້ຳ ບໍ່ສະໝ່ຳສະເໝີ ກໍ່ມີຄຳເຫັນວ່າ: ຂໍພຽງແຕ່ມີນ້ຳໃຊ້ສ່ວນການໃຊ້ຈ່າຍບໍ່ມີບັນຫາ.

- ສຳລັບລູກຄ້າສຳນັກງານ,ອົງການຂອງລັດແລະຄົວເຮືອນທີ່ຍັງນຳໃຊ້ນ້ຳນຳສຳນັກອົງການ. ມີຄຳເຫັນວ່າ: ການຈ່າຍເງິນຄ່ານ້ຳແມ່ນຂຶ້ນກັບລັດ,ເຊິ່ງບໍ່ໄດ້ຈົກຖິງຕົນເອງຈ່າຍ,ແມ່ນບໍ່ຄຳນຶງເຖິງການປະຢັດຢ່າງໃດເລີຍ.ແລະອີກຢ່າງໜຶ່ງເບື້ອງລັດບໍ່ມີລະບຽບຫຼືມາດຕະການໃດ? ທີ່ຈະຄວບຄຸມຜູ້ຊົມໃຊ້ນ້ຳໃນຮ່ວງງົບປະມານຢ່າງເຄັ່ງຄັດ. ອີກດ້ານໜຶ່ງ ເບື້ອງວິສາຫະກິດ ຍັງຂາດການປະຊາສຳພັນ ໃຫ້ລູກຄ້າເຂົ້າໃຈ, ກ່ຽວກັບ ຂະບວນວິຈັດ ການຜະລິດ, ການບໍລິການ, ແລະ ການຊົມໃຊ້ນ້ຳແບບມີປະສິດທິຜົນແລະປະຢັດ.

5. ສິ່ງທ້າທາຍ ຂອງບໍລິສັດນ້ຳປະປາຕໍ່ການປະຫຍັດນ້ຳ ແລະ ຄຸ້ມຄອງນ້ຳ

5.1 ມຸມມອງທາງດ້ານວິສະວະກຳ

ເມື່ອເວົ້າເຖິງນ້ຳປະປາ ທຸກໆຄົນຈະຕ້ອງເຂົ້າໃຈວ່າ ແມ່ນຂະບວນການນຶ່ງໃນການ ຜະຫລິດນ້ຳ ສະອາດ ໂດຍປັດສະຈາກເຊື້ອໂລກ ແລ້ວບໍລິການໃຫ້ສັງຄົມ ຊຶ່ງຜ່ານລະບົບທໍ່ ເຂົ້າໄປເຖິງບ້ານ ຜູ້ໃຊ້ນ້ຳຕະຫລອດ 24 ຊົ່ວໂມງ ໂດຍມີແຮງດັນນ້ຳທີ່ພຽງພໍ. ສະນັ້ນ ຂະແໜງນ້ຳປະປາ ຈຶ່ງເປັນ ຂອດນຶ່ງທີ່ສຳຄັນໃນຂົງເຂດ ການບໍລິການນ້ຳ ເພື່ອຮັບໃຊ້ສັງຄົມ, ຖ້າວ່າບໍລິການ ບໍ່ດີ ສັງຄົມ ຈະຕ້ອງ ມີການຈົ່ມວ່າໄປໃນທາງລົບ ເຮັດໃຫ້ເກີດພາບພົດບໍ່ດີຕໍ່ການດຳເນີນທຸລະກິດ ຂອງລັດ ວິສາຫະກິດ ນ້ຳປະປາ ແລະ ເຮັດໃຫ້ຂັ້ນເທິງຂາດຄວາມ ເຊື່ອຖື ໃນການຈັດຕັ້ງປະຕິບັດ. ໃນເມື່ອ ກ່ອນ ການຊົມ ໃຊ້ນ້ຳປະປາ ແມ່ນມີບໍ່ຫລາຍ ຍ້ອນວ່າຕາໜ່າງ ລະບົບນ້ຳປະປາບໍ່ ກວ້າງ ຂວາງ ແລະມີຂອບເຂດຈຳ ກັດການ ຂະ ຫຍາຍຕົວຂອງພົນລະເມືອງ ແລະ ອຸດສາຫະກຳ ຕ່າງໆ ເກີດຂຶ້ນ ຢ່າງວ່ອງໄວໃນຊ່ວງ ລະຍະເວລາ ອັນສັ້ນ ແລະ ຊຶ່ງເປັນພາລະອັນໜັກໜ່ວງ ຂອງ ພະນັກງານ ວິຊາການ ແລະ ກຳມະກອນ ໝົດ ທຸກຄົນ ພາຍໃນ ລັດວິສາຫະກິດ ນ້ຳປະປາລາວ ທີ່ຈະຕ້ອງ ໄດ້ຄົ້ນຄ້ວາ ແລະ ຊອກຫາ ສາເຫດ ຂອງມັນ ເພື່ອປ້ອງກັນ ບໍ່ໃຫ້ນ້ຳ ສູນເສັຍ ແລະ ຕົກເຮ່ຶ ເສັຍຫາຍ ໃນຢ່າງໄຮ້ປະໂຫຍດ ຊຶ່ງເປັນ ທຶນຮອນ ອັນໃຫ່ຍຫລວງ ຂອງ ປະເທດ ຊາດ ເວົ້າລວມ, ເວົ້າສະ ເພາະ ກໍແມ່ນທຶນຮອນ ຂອງ ລັດວິສາຫະກິດ ນ້ຳປະປາລາວ.

ຈຸດປະສົງ ແລະ ເປົ້າໝາຍ Aim and target

ການຄຸ້ມຄອງ ແລະລົດຜ່ອນນ້ຳສູນເສັຍ ໃນລະບົບທໍ່ ແມ່ນເປັນບັນຫາທີ່ສຳຄັນທີ່ສຸດ ຊຶ່ງລັດວິສາຫະ ກິດນ້ຳປະປາ ຈະຕ້ອງ ໄດ້ເອົາໃຈໃສ່ເປັນພິເສດ ແລະ ຈະຕ້ອງ ມີວິທີການ ທີ່ເໝາະສົມເພື່ອໃຫ້ ນ້ຳ ສູນເສັຍ ຢູ່ໃນປະລິມານທີ່ຕ່ຳສຸດ ຊຶ່ງ ຈຸດປະສົງ ອັນຕົ້ນຕໍ ຂອງມັນ ກໍແມ່ນ ເພື່ອ ລົດຜ່ອນຕົ້ນທຶນ ການ ຜະຫລິດເຊັ່ນ: ຄ່າໄຟຟ້າ,ຄ່າສານເຄມີ,ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆ, ນອກຈາກນີ້ກໍຍັງ ເປັນ ການເພີ້ມລາຍໄດ້ ໃນການຂາຍນ້ຳ ແລະ ເພີ້ມສະມັນ ຕະພາບ ໃນການບໍລິການນ້ຳ ໃຫ້ສັງຄົມ ໃຫ້ມີປະສິດທິຜົນ ສູງຂຶ້ນກວ່າເກົ່າ ແລະນ້ຳທີ່ປະຫຍັດ ໄດ້ ຈະໄດ້ ຂະຫຍາຍ ໄປສູ່ ຂົງເຂດອື່ນໃຫ້ ໄດ້ ຊົມໃຊ້ ນ້ຳປະປາ ທົ່ວເຖິງກັນ ແລະ ມີແຮງດັນ ພຽງພໍ. ອີກດ້ານນຶ່ງ ເຮົາສາມາດ ລົດຜ່ອນ ການ ລົງທຶນ ເຂົ້າໃນກິດຈະການຂະຫຍາຍ ໂຮງງານ ຜະຫລິດນ້ຳປະປາ ໝາຍຄວາມວ່າ ເຮົາສາມາດ ຍືດເວລາ ອອກໄປອີກ ໃນລະຍະນຶ່ງ ໃນການ ຂະຫຍາຍ ໂຮງງານ ຜະຫລິດ ນ້ຳປະປາ ຍ້ອນວ່າ ຄວາມສາມາດ ໃນການຜະຫລິດ ຍັງມີ ເຫລືອເຟືອຢູ່.

ສະນັ້ນ, ເພື່ອບັນລຸຈຸດປະສົງດັ່ງກ່າວ ພວກເຮົາ ຈະຕ້ອງໄດ້ມີ ແຜນການລະຍະສັ້ນ, ແຜນການ ລະຍະຍາວໃນການປອ້ງກັນ ແລະລົດຜ່ອນນ້ຳສູນເສັ່ງ ໃນລະບົບນ້ຳປະປາ ຢ່າງ ຮອບດ້ານ. ການຄຸ້ມຄອງ ແລະລົດຜ່ອນນ້ຳສູນເສັ່ງ ໃນລະບົບທໍ່ ແມ່ນເປັນບັນຫາທີ່ສຳຄັນ ທີ່ສຸດ ຊຶ່ງລັດວິສາ ຫະ ກິດນ້ຳປະປາ ຈະຕ້ອງ ໄດ້ເອົາໃຈໃສ່ເປັນພິເສດ ແລະ ຈະຕ້ອງ ມີວິທີການ ທີ່ ເໝາະສົມເພື່ອ ໃຫ້ ນ້ຳ ສູນເສັ່ງ ຢູ່ໃນປະລິມານທີ່ຕ່ຳສຸດ.

ນ້ຳສູນເສັ່ງ Unaccounted For Water (UFW)

ແມ່ນ ຄວາມແຕກຕ່າງ ຫລື ຜົນລົບ ລະຫ່ວາງ ປະລິມານນ້ຳຜະຫລິດ ອອກຈາກໂຮງງານ ແລ້ວ ສົ່ງເຂົ້າໃປໃນທໍ່ ແລະ ປະລິມານນ້ຳ ທີ່ຈົດໄດ້ ແລ້ວ ພິມບິນເກັບເງິນ, ຊຶ່ງເຮົາໄດ້ແບ່ງນ້ຳສູນ ເສັ່ງ ດັ່ງກ່າວນີ້ ອອກເປັນສອງສ່ວນ ດ້ວຍກັນຄື :

ນ້ຳສູນເສັ່ງທີ່ເກີດຈາກຈຸດຮົ່ວ Physical losses

ຊຶ່ງລວມມີ ອ່າງເກັບນ້ຳຮົ່ວ, ອ່າງເກັບນ້ຳລົ້ນ, ທໍ່ສົ່ງໃຫ່ຍຮົ່ວ, ທໍ່ແຈກຈ່າຍນ້ຳຮົ່ວ, ທໍ່ບໍລິການເຂົ້າ ເຮືອນຮົ່ວ ແລະ ອຸບປະກອນທໍ່ນ້ຳຮົ່ວເຊ່ນ : ຂໍ້ຕໍ່,ຂໍ້ງໍ,ປະຕູນ້ຳ,ປະຕູລົ້ມ,ປະຕູລະບາຍ ,ກ໊ອກດັບ ເພິ່ງ ແລະ ອື່ນໆ.

ນ້ຳສູນເສັ່ງທີ່ບໍ່ເກີດຈາກຈຸດຮົ່ວ NonPhysical losses

ຊຶ່ງສ່ວນໃຫ່ຍແລ້ວ ແມ່ນ ສິ່ງທີ່ຜິດປົກກະຕິ ທາງດ້ານເຕັກນິກ ຢູ່ໃນ ລະບົບໝໍ້ແທກນ້ຳ ເຊ່ນ: ໝໍ້ແທກນ້ຳບໍ່ທ່ຽງຕົ້ງ, ໝໍ້ແທກນ້ຳຕາຍ, ໝໍ້ແທກນ້ຳບໍ່ເໝາະສົມກັບຂະໜາດຂອງການ ຊົມໃຊ້ ນ້ຳ ແລະ ໝໍ້ແທກນ້ຳ ທີ່ບໍ່ໄດ້ມາດຕະຖານ ລາຄາຖືກ ແລະ ມີຄຸນນະພາບຕ່ຳ. ການຕິດຕັ້ງ ໝໍ້ແທກ ນ້ຳ ບໍ່ຖືກ ມາດຕະຖານເຕັກນິກ ເຮັດໃຫ້ໝໍ້ແທກນ້ຳ ຫງ່ຽ. ຕິດຕັ້ງ ກ່ອນບໍ່ທັນໄດ້ສ້ຽ ເອກກະສານ ຈ່າຍເງິນ, ຕິດຕັ້ງແລ້ວ ບໍ່ເອົາ ໝໍ້ແທກນ້ຳໃປໃສ່, ບໍ່ໄດ້ ເຂົ້າກົດ ເລກບັນຊີບິນເກັບເງິນ ແລະ ລະບົບ ການພິມບິນເກັບເງິນ ບໍ່ຖືກຕ້ອງ. ອ່ານໝໍ້ແທກນ້ຳ ບໍ່ຖືກຕ້ອງ ກັບ ຕົວຈິງ ມີການ ຄາດຄະເນ ຫລ ເດົາເອົາ, ໝໍ້ແທກນ້ຳ ບໍ່ສາມາດ ອ່ານຕົວເລກໄດ້ ເຊ່ນ: ໝໍ້ແທກນ້ຳໜ້າ ມືດ, ໜ້າມົວ, ໜ້າແຕກ, ໝໍ້ແທກນ້ຳຝັ່ງດິນ, ດິນຖົມ ໝໍ້ແທກນ້ຳ ບໍ່ໝຸນກົ່ວ ທັ້ງສອງດ້ານ ນອກຈາກ ນັ້ນ ກ໋ຍັງມີ ການລັກໃຊ້ ນ້ຳ ໂດຍ ບໍ່ຜ່ານໝໍ້ແທກນ້ຳ, ລັກປັ້ນໝໍ້ແທກນ້ຳ ຫລ ພະຍາຍາມເຮັດໃຫ້ ໝໍ້ແທກ ນ້ຳ ຕາຍ ເຊ່ນ: ເອົາຄົມ ໜີບແກນໃບພັດ ໃຫ້ຄົດ, ເອົາໄມ້ ໃປຄັດ ໃບພັດໃວ້, ເອົາສາຍ ເຊືອກ ຫລ ສາຍເຫລັກ ລວດ ໃປຄັດໃບພັດໃວ້, ເອົາແມ່ເຫັລກ ໃປຕິດໃວ້ກັບ ໝໍ້ແທກນ້ຳ ຊຶ່ງເວ້ົາ ລວມແລ້ວ ແມ່ນລູກຄ້າ ພະຍາຍາມ ຫາທຸກວິທີ່ທາງ ເພື່ອ ເຮັດແນວໃດ ໃຫ້ໄດ້ຈ່າຍເງິນຄ່ານ້ຳໜ້ອຍທີ່ສຸດ ເທ່ົາທີ່ຈະ ເຮັດໄດ້.

ນ້ຳສູນເສັ່ງທີ່ໃຊ້ເພື່ອສາທາລະນະປະໂຫຍດ Public use

ຊຶ່ງສ່ວນໄຫ່ຍ ແມ່ນນ້ຳ ທີ່ຮັບໃຊ້ສັງຄົມ, ໃຊ້ໃນກິດຈະການ ສາທາລະນະປະໂຫຍດ ຫືລ ນ້ຳໃຊ້ຟີຣ ເຊ່ນ: ນ້ຳລ້າງອ່າງ ຢູ່ໂຮງງານ ຜະຫລິດນ້ຳປະປາ, ນ້ຳໃຊ້ລ້າງ ທໍ່ນ້ຳປະປາ, ນ້ຳໃຊ້ມອດໄຟ.

ລັກຊະນະການຮົ່ວໄຫລຂອງນ້ຳ Particulars of Leakage

ການຮົ່ວໄຫລ ຂອງນ້ຳ ໃນລະບົບທໍ່ ມັນຈະ ແຕກຕ່າງກັນ ແຕ່ລະຈຸດຊຶ່ງອີງໃສ່ເງື່ອນໄຂ ຕົວຈິງ ຂອງ ສະພາບແວດລ້ອມ ຊຶ່ງລວມມີ ສາມລັກຊະນະຕໍ່ລົງໃປນີ້:

ນ້ຳຮົ່ວທີ່ພົບເຫັນດ້ວຍຕາເປົ່າ Visible Leaks

ແມ່ນນ້ຳທີ່ຮົ່ວແລ້ວໄຫລອອກມາເທິງໜ້າດິນຊຶ່ງສະດວກໃນການຊອກຫາ, ຮູ້ສະຖານທີ່ຈຸດຮົ່ວ ໄດ້ຢ່າງແນ່ນອນ ແລະ ສາມາດສ້ອມແປງໄດ້ໃວ.

ນ້ຳຮົ່ວທີ່ເຄິ່ງເຫັນເຄິ່ງບໍ່ເຫັນ Semi-Visible Leaks

ແມ່ນນ້ຳຮົ່ວທີ່ເຮົາພົບເຫັນແດ່ ບໍ່ເຫັນແດ່ ຊຶ່ງຈະຕ້ອງໄດ້ຊອກຫາດ້ວຍຕາເປົ່າຢ່າງລະອຽດ ເພາະວ່າ ນ້ຳຮົ່ວລັກຊະນະນີ້ ເຮົາຈະພົບເຫັນຢູ່ໃນຂຸມເລີກ ປະຕູນ້ຳ,ປະຕູລົມ,ປະຕູລະບາຍ ແລະ ກອົກດັບ ເພີງ ເທ່ລານີ້ເປັນຕົ້ນ. ບາງເທື່ອເຮົາອາດພົບເຫັນຢູ່ຕາມຕະຄອງ ຮ່ອງນ້ຳ ຮ່ອງລະບາຍ ບ່ອນ ທີ່ມີທໍ່ນ້ຳຜ່ານ.

ນ້ຳຮົ່ວທີ່ບໍ່ສາມາດແນມເຫັນດ້ວຍຕາເປົ່າ Invisible Leaks

ແມ່ນນ້ຳທີ່ຮົ່ວຢູ່ໄຕ້ດິນ ຊຶ່ງເຮົາບໍ່ສາມາດແນມເຫັນດ້ວຍຕາເປົ່າໄດ້ ຫຍຸ້ງຍາກໃນການ ຄົ້ນຫາ ເພາະວ່າເຮົາບໍ່ຮູ້ສະຖານທີ່ຈຸດຮົ່ວແນ່ນອນ ບາງເທື່ອຮົ່ວຢູ່ຈຸດນຶ່ງ ພັດໄປໄຫລອອກຢູ່ຈຸດອື່ນ ໂດຍອີງໃສ່ເງື່ອນໄຂແລະຄຸນສົມບັດຂອງດິນ ບາງເທື່ອກ້ໄຫລຊຶມຜ່ານໄປນ້ຳດິນແລ້ວໄຫລລົງ ນ້ຳ ຕະຄອງຮ່ອງນ້ຳໄປເລີຍ ຊຶ່ງເຮົາຈະຕ້ອງໄດ້ນ້ຳໃຊ້ເຄື່ອງມືອຸບປະກອນຊອກນ້ຳຮົ່ວເຂົ້າຊ່ວຍ.

ສາເຫດທີ່ພາໃຫ້ນ້ຳຮົ່ວໄຫລ Causes of Leaks

ການຮົ່ວໄຫລ ຂອງນ້ຳໃນລະບົບທໍ່ ເກີດຂຶ້ນ ມາຈາກ ຫລາຍສາເຫດ ທີ່ ແຕກຕ່າງກັນ ຊຶ່ງ ເຮົາ ມັກພົບເຫັນເລື້ອຍໆ ມີດັ່ງນີ້ :

ການສຳຫລວດອອກແບບບໍ່ເໝາະສົມ Improper design

ໝາຍຄວາມວ່າ ອອກແບບ ບໍ່ຖືກຕອ້ງຕາມມາດຕະຖານເຕັກນິກ ແລ້ວ ເປັນສາເຫດໃຫ້ ວຽກງານ ການຂຸດທາງວາງທໍ່,ການວາງທໍ່ຂ້າມຂົວ,ຂ້າມຫ້ວຍ,ຂ້າມຮ່ອງລະບາຍ ລວມທັງການ ຕິດຕັ້ງ ເອົາບ໊ ເຂົ້າບ້ານໃຫມ່ ແລະອື່ນໆ ບໍ່ມີ ປະສິດທິຜົນ ແລ້ວ ເຮັດໃຫ້ ທໍ່ນ໊ ແຕກຮົ່ວໄດ້ງ່າຍ

ນາຍຊ່າງຕໍ່ທໍ່ນ໊ ບໍ່ມີຄຸນນະພາບ Poor Workmanship

ໝາຍຄວາມວ່າ ນາຍຊ່າງ ກ໋ານະກອນ ບໍ່ມີ ຄວາມຊ໋ານິຊ໋ານານ ໃນການຕິດຕັ້ງວາງທໍ່ ບໍ່ໄດ້ ຜ່ານ ການຝຶກອົບຮົມມາກ່ອນ ຫລື ຝຶກອົບຮົມມາແລ້ວ ແຕ່ບໍ່ປະຕິບັດຕາມເຕັກນິກວາງອອກ ຊຶ່ງເຫັນໄດ້ ຈາກການ ກໍ່ສ້າງວາງທໍ່ ຫລື ການຕິດຕັ້ງຫາກໍ່ສ໋ າເລັດແລ້ວເກີດມີນ໊ ຮົ່ວຢູ່ເລື້ອຍ ໆ .

ວັດຖຸອຸບປະກອນທໍ່ນ໊ ມີຄຸນນະພາບຕ໋ ່ Poor quality of materials

ທໍ່ນ໊ ປະປາ ທີ່ບໍ່ໄດ້ມາດຕະຖານ ລາຄາຖືກໂດຍບໍ່ຜ່ານ ການກວດກາ ແລະ ຈັດຊື້ຕາມລະ ບຽບການ ຈຶ່ງເປັນສາເຫດນຶ່ງ ທີ່ພາໃຫ້ ທໍ່ແຕກ ທໍ່ຮົ່ວ ໄດ້ຢ່າງງ່າຍດາຍ.

ນ໊ ໜັກຈອນ Traffic load

ທໍ່ນ໊ ປະປາ ທີ່ວາງຂ້າມທາງ ຫລື ວາງຂ້າງທາງ ຕ້ອງໄດ້ ຮັບ ການສັ່ນສະເທືອນ ຊຶ່ງ ເຮົາ ເອີ້ນວ່າ ນ໊ ໜັກຈອນ ທີ່ ເກີດຈາກການສັນຈອນ ໄປມາຂອງລົດໜັກ ແລ້ວເຮັດໃຫ້ ດິນຍຸບ ຕົວລົງ ກະທົບ ໃສ່ທໍ່ນ໊ ແຕກຫັກ ຢູ່ເລື້ອຍໆ

ອາຍຸການໃຊ້ງານຂອງທໍ່ໝົດຄຸນນະພາບ Aging and deterioration

ໃນເມື່ອທໍ່ນ໊ ປະປາ ແລະ ອຸບປະກອນຕ່າງໆທີ່ ໃຊ້ງານມາ ຫລາຍປີ ແນ່ນອນ ຄຸນນະພາບ ຂອງມັນ ກ໋ ຕ້ອງ ເຊື່ອມລົງໄປເລື້ອຍໆ ແລ້ວ ບໍ່ສາມາດຕ້ານທານ ກັບແຮງດັນ ພາຍໃນ ແລະ ການກະທົບ ຈາກ ພາຍນອກໄດ້ ນີ້ກ໋ ເປັນສາເຫດນຶ່ງ ທີ່ເຮັດໃຫ້ ທໍ່ແຕກທໍ່ຮົ່ວໄດ້ງ່າຍ.

ແຮງດັນຂອງນ໊ ໃນທໍ່ເພີ້ມຂຶ້ນ Increase of water pressure

ນີ້ກ໋ ເປັນສາເຫດນຶ່ງ ທີ່ເຮັດໃຫ້ການຮົ່ວໄຫລຂອງນ໊ ເພີ້ມຂຶ້ນ ຊຶ່ງແມ່ນກົດເກນ ຂອງທ໋ ມະຊາດ ຖ້າວ່າ ບ່ອນໃດທໍ່ນ໊ ມີຮູຜົ່ວ ແລະ ນອບບາງນ໊ ກ໋ ໄຫລອອກບ່ອນນັ້ນ.

ການກໍ່ສ້າງພື້ນຖານໂຄງຮ່າງ Infrastructure

ໃນການປັບປຸງ ບູລະນະ ຕົວເມືອງ ຂອງ ລັດຖະບານ ຄື ການກໍ່ສ້າງ ພື້ນຖານໂຄງຮ່າງ ໃນຕົວເມືອງ ນີ້ກໍເປັນສ່ວນນຶ່ງ ທີ່ເຮັດໃຫ້ ທໍ່ນ້ຳ ແຕກຮົ່ວຢູ່ເລື້ອຍໆ ເຊ່ນ ການກໍ່ສ້າງສ້ອມແປງຂະ ຫຍາຍ ຖະໜົນ ຫົນທາງ, ສາຍໂທລະສັບ ແລະ ການວາງສາຍໄຟຟ້າແຮງສູງໃຕ້ດິນເປັນຕົ້ນ

ຄ່າ PH ຂອງນ້ຳ PH value of Water

ຖ້າວ່າ ຄ່າPH ຂອງນ້ຳ ໃນທໍ່ຫລຸດລົງຕ່ຳ ບໍ່ໄດ້ມາດຕະຖານ ຊຶ່ງເປັນເຫດໃຫ້ ນ້ຳໃນທໍ່ເກີດ ເປັນກົດ ເຮົາ ເອີ້ນວ່າທາດອາຊິດ ແລ້ວເກີດມີ ຕະກອນຈັບຕົວກັນ ເປັນກ້ອນ ຕິດຢູ່ຜະໜັງ ທາງໃນທໍ່ນ້ຳ ຊຶ່ງ ເຮົາ ເອີ້ນວ່າ ຂີ້ໝັ້ງໆ ແລ້ວເກາະຊ່ອນ ທໍ່ນ້ຳ ແຕ່ທາງໃນ ອອກມາ ທາງນອກ ດິນນານໄປຫລາຍ ປີ ແລ້ວເຮັດໃຫ້ ທໍ່ນ້ຳຮົ່ວ ຢູ່ເລື້ອຍໆ.

ນ້ຳໃຕ້ດິນເປັນກົດ Acidic water in the ground

ຄຸນລັກຊະນະ ຂອງດິນ ແຕ່ລະຂົງເຂດ ກໍມີ ລັກຊະນະ ແຕກຕ່າງກັນໄປ ຊຶ່ງບາງເຂດ ນ້ຳໃຕ້ດິນ ເກີດເປັນກົດ ໝາຍຄວາມວ່າ ນ້ຳໃຕ້ດິນ ເກີດມີ ທາດອາຊິດຫລາຍ ແລ້ວເກາະຊ່ອນ ທໍ່ນ້ຳ ປະປາ ແຕ່ທາງນອກ ເຂົ້າໃນທໍ່ນ້ຳ ຄືດັ່ງ ທີ່ໄດ້ເວົ້າມາຂ້າງເທິງ.

ວິທີຄຸ້ມຄອງ ແລະ ລົດຜ່ອນນ້ຳສູນເສັ່ງ Methodology to reduce UFW

ການລົດຜ່ອນນ້ຳສູນເສັ່ງ ແມ່ນ ເປັນບັນຫານຶ່ງທີ່ສຳຄັນ ແລະຫຍຸ້ງຍາກສັບສົນທີ່ສຸດ ໃນການຈັດຕັ້ງ ປະຕິບັດ ຖ້າວ່າເຮົາປະປ່ອຍໃຫ້ ອັດຕາປະລິມານ ນ້ຳສູນເສັ່ງ ໃຫ້ສູງຂຶ້ນ ເຮົາຈະຕ້ອງໃດ້ ໃຊ້ ງົບປະ ມານ ສູງຂຶ້ນເໝືອນກັນ ໃນການຄຸ້ມຄອງ ແລະ ລົດຜ່ອນນ້ຳສູນເສັ່ງ ຊຶ່ງເຮົາຈະຕ້ອງໃດ້ດຳເນີນ ໃປ ດັ່ງນີ້ :

ຄວາມຕອ້ງການໃນເບື້ອງຕົ້ນ Pre-requisite actions

ວຽກງານ ອັນຮີບດ່ວນ ໃນເບື້ອງຕົ້ນ ທີ່ສຳຄັນ ກ່ອນໝູ່ໝົດ ໃນການຄວບຄຸມນ້ຳສູນເສັ່ງ ຊຶ່ງເຮົາຈະຕອ້ງໃດ້ວາງແຜນ ແລະ ພິຈາລະນາ ໃນການຄຸ້ມຄອງ ດັ່ງຕ່ໃປນີ້ :

- ໝໍ້ແທກນ້ຳໃຫ່ຍອອກຈາກໂຮງງານ Flow Meter

ການຕິດຕັ້ງ ໝໍ້ແທກນ້ຳໃຫ່ຍ ຢູ່ໂຮງງານ ແມ່ນເຮົາ ສາມາດ ຮູ້ໄດ້ວ່າ ປະລິມານນ້ຳ ທັງໝົດ ທີ່ສົ່ງອອກ ຈາກໂຮງງານ ມີເທ່ົາໃດ, ໝໍ້ແທກນ້ຳໃຫ່ຍ ຢູ່ໂຮງງານຕອ້ງ ໃຫ້ໄດ້ໃຊ້ງານ ຕະຫລອດ

ເວລາ, ທ່ຽງຕົງ, ຊັດເຈນ ແລະ ຕອ້ງມີການ ບັນທຶກລະອຽດ ແຕ່ລະຊົ່ວໂມງ, ແຕ່ລະວັນ ເພື່ອ ຕອ້ງການຮູ້ ປະລິມານນ ້ຳສິ່ງອອກ ໃນແຕ່ລະເດືອນ ແລະ ໃນແຕ່ລະປີ.

- ໝໍ້ແທກນ ້ຳລູກຄ້າ Customer's Meter

ໝໍ້ແທກນ ້ຳ ທີ່ນ ຳມາໃຊ້ ແຕ່ລະ ຂະໜາດ ແຕ່ລະ ຊະນິດ ເຮົາຕ້ອງກ ຳນົດລະອຽດ ກ່ຽວກັບ ຄຸນສົມບັດ ແລະ ຄຸນລັກຊະນະ ຂອງມັນ ເຮົາຕອ້ງໄດ້ ຄົ້ນຄວ້າ ແລະ ສຶກສາຂໍ້ມູນ ເພື່ອໃຫ້ ແທດເໝາະກັບເງື່ອນ ໄຂ ຕົວຈິງໃນປະເທດເຮົາ ເຊັ່ນ ຄຸນນະພາບຂອງນ ້ຳ ແລະ ແຫລ່ງນ ້ຳ ທີ່ມາ ຜະຫລິດ ນ ້ຳປະປາ. ແຕ່ສິ່ງສ ຳຄັນ ແມ່ນ ໃຫ້ໄດ້ ມາດຕະຖານ ທີ່ວາງໄວ້.

- ວັດຖຸ ແລະ ອຸບປະກອນທໍ່ນ ້ຳ Pipe and Fittings

ວັດຖຸ ແລະ ອຸບປະກອນ ທໍ່ນ ້ຳ ທີ່ມານ ຳໃຊ້ ເຂົ້າໃນ ວຽກງານຕິດຕັ້ງ ເອົານ ້ຳເຂົ້າບ້ານໃໝ່, ວຽກສ້ອມແປງ ນ ້ຳແຕກ ນ ້ຳຮົ່ວ, ວຽກປ່ຽນຖ່າຍລະບົບທໍ່ເກົ່າ ແລະ ວຽກກໍ່ສ້າງ ຂະຫຍາຍ ທໍ່ນ ້ຳ ເຮົາຕອ້ງ ກ ຳນົດລະອຽດ ໃຫ້ຖືກຕອ້ງຕາມ ມາດຕະຖານສາກົນ.

- ແຜນຍຸດທະສາດ Strategy

ອົງການ ມະຫາພາກ ຕ້ອງໄດ້ເອົາໃຈໃສ່ ຢ່າງຕັ້ງໜ ້າ ເຂົ້າໃນວຽກງານ ຄຸ້ມຄອງ ແລະ ລິດຜ່ອນ ນ ້ຳສູນເສັ ໃນທົ່ວປະເທດ, ແຕ່ລະແຂວງ ຕ້ອງມີການ ຝຶກອົບຮົມ ແລະ ແລກປ່ຽນ ຖອດຖອນ ບົດຮຽນ ຊຶ່ງກັນ ແລະ ກັນ, ເພື່ອປັບປຸງ ແລະ ນ ຳໃຊ້ ເຕັກໂນໂລຍີ ແບບໃໝ່ ໃຫ້ເໝາະສົມ ກັບສະພາບ ທີ່ພວກເຮົາ ພົບພໍ້ໃນ ປະຈຸບັນ. ສະນັ້ນ, ອົງການ ມະຫາພາກ ຕ້ອງມີ ແຜນການ ລະອຽດ ເຊ່ນ ແຜນການ ລະຍະສັ້ນ ແລະ ແຜນການ ລະຍະຍາວ ແລ້ວ ມອບໃຫ້ ອົງການ ທອ້ງຖິ່ນ ໄປຈັດຕັ້ງ ປະຕິບັດ ໃຫ້ໄດ້ ຮັບໝາກຜົນ ພ້ອມທັງມີການ ຕິດຕາມ ກວດກາ ຢ່າງເປັນປະຈ ຳ.

ການລິດຜ່ອນນ ້ຳສູນເສັ ທີ່ເກີດຈາກຈຸດຮົ່ວ

Actions to reduce physical losses

ການລິດຜ່ອນ ນ ້ຳສູນເສັ ທີ່ເກີດຈາກຈຸດຮົ່ວ ເປັນວຽກງານນຶ່ງ ທີ່ມີຄວາມ ຫຍຸ້ງຍາກ ແລະ ສັບສົນ ທີ່ສຸດ ຊຶ່ງ ເຮົາຕ້ອງໄດ້ ອາໃສ ບຸກຄະລາກອນ ທີ່ມີ ຄວາມສາມາດ ຄວາມຊ ຳນານ ເພື່ອ ວາງແຜນ ແລະ ຈັດຕັ້ງປະຕິບັດ ໃນການປ ້ອງກັນ ບ ່ໃຫ້ນ ້ຳແຕກ ນ ້ຳຮົ່ວ ໃນລະບົບທໍ່ນ ້ຳປະປາ ຊຶ່ງ ຈະຕ ້ອງ ໄດ້ ດ ຳເນີນ ໄປຫລາຍດ ້ານ ຄຽງຄູ່ກັນໄປ ເຊ່ນ :

ການຊອກຫານ້ຳຮົ່ວ Leak detection

ການຊອກຫານ້ຳຮົ່ວ ຈະຕອ້ງໄດ້ດຳເນີນໃປ ທັງສອງດ້ານ ພ້ອມກັນຄື : ການຊອກຫາ ນ້ຳຮົ່ວ ເທິງໜ້າດິນ ແລະ ການຊອກຫານ້ຳຮົ່ວໃຕ້ດິນ ຊຶ່ງ ແຕ່ລະດ້ານ ມັນມີຄວາມ ສະດວກ ແລະ ງ່າຍ ແຕກຕ່າງກັນໃປ ເຊ່ນ :ວິທີ ຊອກຫານ້ຳຮົ່ວ ຕາມສາຍທໍ່ Acoustic Method, ວິທີ ວັດແທກ ປະລິມານນ້ຳ Measurement Method, ວິທີ ໃຊ້ເຄື່ອງຟັງສຽງ ແບບທັນສະໃໝ Leak Noise Correlation

- **ການຊອກຫານ້ຳຮົ່ວເທິງໜ້າດິນ** ແມ່ນຊອກຫາໄດ້ງ່າຍ ແລະ ສະດວກໃນການຄົ້ນຫາ ພຽງແຕ່ເຮົາຍ່າງ ສັງເກດ ຕາມລະບົບສາຍທໍ່ໂດຍໃຊ້ປະສົບການເຮົາກໍຈະພົບເຫັນ.

- **ການຊອກຫານ້ຳຮົ່ວໃຕ້ດິນ** ແມ່ນພົບຄວາມຫຍຸ້ງຍາກໃນການຄົ້ນຫາ ເຮົາຕ້ອງໄດ້ ນຳໃຊ້ເຄື່ອງມື ອຸບປະກອນສຳຫລວດຊອກຫານ້ຳຮົ່ວເຂົ້າຊ່ວຍ ວິທີການນີ້ ມັນມີ ຂັ້ນຕອນ ລະອຽດ ໃນການຈັດ ຕັ້ງປະຕິບັດ ກ່ຽວກັບລະບົບເຕັກນິກ ແລະ ວິທີການ ສຳຫລວດຊອກຫານ້ຳຮົ່ວໃຕ້ດິນ. ສະນັ້ນ, ກ່ອນອື່ນໝົດ ກ່ອນເຮົາຈະລົງ ສຳຫລວດ ຊອກຫານ້ຳຮົ່ວໄດ້ ເຮົາຕອ້ງຮູ້ ລະບົບເຕັກນິກ ຂອງມັນ ຫລາຍດ້ານ ເຊ່ັນ : ນ້ຳຮົ່ວ ແມ່ນຫຍັງ ? ສຽງນ້ຳຮົ່ວ ຄືແນວໃດ ? ຂັ້ນຕອນ ວິທີການສຳຫລວດ ນ້ຳຮົ່ວ ຄືແນວໃດ ? ປະສິດທິຜົນ ທາງດ້ານເຕັກນິກ ຄືແນວໄດ ? ເຮົາຄວນ ເລືອກເອົາ ແນວໃດ ໃຫ້ເໝາະສົມ ກັບ ສະພາບ ເງື່ອນໄຂ ຕົວຈິງ ພາຍໃນ ປະເທດເຮົາ.

ການສ້ອມແປງ ນ້ຳຮົ່ວ Passive Leakage Control

ວິທີນີ້ ເປັນວິທີການ ຄວບຄຸມ ນ້ຳສູນເສັ່ງ ທີ່ງ່າຍດາຍທີ່ສຸດ ໂດຍທົ່ວໃປແລ້ວ ວິທີນີ້ ເມື່ອພົບເຫັນ ນ້ຳຮົ່ວ ທີ່ ປາກົດຂຶ້ນມາ ເທິງໜ້າດິນ ແລ້ວດຳເນີນ ການສ້ອມແປງ ໂດຍທັນທີ ໃຫ້ທັນເວລາ. ຈຸດນ້ຳຮົ່ວ ດັ່ງກ່າວ ແມ່ນເຮົາຈະຮູ້ໄດ້ດັ່ງນີ້ :

- ນ້ຳຮົ່ວ ທີ່ພົບເຫັນດ້ວຍຕາເປົ່າ ທີ່ໄຫລຂຶ້ນມາເທິງໜ້າດິນ.

ລູກຄ້າແຈ້ງໃຫ້ຮູ້ ຫລື ລາຍງານວ່າ ນ້ຳອອກຄ່ອຍ, ນ້ຳບ່ໄຫລ ແລະອື່ນໆ.

- ປະຊາຊົນທົ່ວໃປ ຕາມສະຖານທີ່ຕ່າງໆ ແຈ້ງໃຫ້ຮູ້.
- ພະນັກງານນ້ຳປະປາ ໂດຍສະເພາະ ແມ່ນ ພະນັກງານຈົດນ້ຳເກັບເງິນ ແຈ້ງໃຫ້ຮູ້.
- ພະນັກງານ ເດີນສຳຫລວດນ້ຳຮົ່ວ ລົງໃປກວດກາ ຕາມລະບົບສາຍທໍ່ ໃປສັງເກດຕາມ ສະຖານທີ່ຕ່າງໆ, ຕາມຕະຄອງຮ່ອງນ້ຳ, ຕາມບ່ອນທີ່ມີ ນ້ຳຂັງຕະຫລອດປີ ຫລື ບ່ອນທີ່ມີ ຕົ້ນໄມ້ ຕົ້ນຫຍ້າຊຸງວງາມ ຜິດປົກະຕິ ຕະຫລອດປີ ເປັນຕົ້ນ.

ການຄຸ້ມຄອງລະບົບສາຍທໍ່ Protection of pipelines

ວຽກງານດັ່ງກ່າວ ກໍແມ່ນວຽກງານນຶ່ງທີ່ສຳຄັນ ໃນການຄວບຄຸມ ແລະ ລົດຜ່ອນນ້ຳສູນເສັ່ງໃນ ລະບົບທໍ່ ຊຶ່ງເຮົາຈະຕ້ອງ ໄດ້ດຳເນີນໃປດັ່ງຕ່ໃປນີ້ :

- ແຜນຜັງລະບົບທໍ່ Mapping system ຕ້ອງໃຫ້ທັນສະໄໝຕະຫລອດເວລາ ເຊ່ນ ຈຸດທີ່ຕັ້ງ ຂອງທໍ່ນ້ຳ ແລະ ອຸບປະກອນຕ່າງໆ ເພື່ອສະດວກ ໃນການຄຸ້ມຄອງ ດູແລຮັກສາ.
- ລົງຕິດຕາມກວດກາ ປະຈຳວັນ Patrol of pipelines ກ່ຽວກັບ ການກໍ່ສ້າງພື້ນຖານ ໂຄງຮ່າງ ໃນຕົວເມືອງ ເພື່ອ ປ້ອງກັນ ບໍ່ໃຫ້ທໍ່ນ້ຳ ຖືກທຳລາຍ ຈາກການກໍ່ສ້າງຕ່າງໆ ເຊ່ນ :ການກໍ່ສ້າງ ຂະຫຍາຍ ຖະໜົນ ຫົນທາງ, ສາຍໄຟຟ້າໃຕ້ດິນ ແລະ ສາຍໂທລະສັບ ໃຕ້ດິນ ດັ່ງນີ້ ເປັນຕົ້ນ.
- ການອອກແບບ ແລະ ການກໍ່ສ້າງ Design and Construction of water works facilities ຈະຕ້ອງໄດ້ຄຳນຶງເຖິງ ຫລັກການ ທາງດ້ານເຕັກນິກ ຕາມມາດຕະຖານສາກົນ ເຊ່ນ ການວາງທໍ່ ຂ້າມທາງ ຂ້າມຂົວ ຂ້າມຫ້ວຍ ຂ້າມຮ່ອງ ຫລື ວາງທໍ່ລອດຮ່ອງ ລະ ບາຍ ຕ້ອງໃຫ້ໄດ້ມາດຕະຖານ ພ້ອມທັງ ຄຸນນະພາບ ຂະໜາດ ແລະ ຊະນິດ ຂອງທໍ່ນ້ຳ ແລະ ອຸບປະກອນຕ່າງໆ ທີ່ຈະນຳໃຊ້.
- ການປ່ຽນຖ່າຍ ລະບົບທໍ່ເກົ່າ Replacement of old pipe ຈະຕອ້ງໄດ້ ເຮັດຢ່າງ ຕໍ່ ເນື່ອງ ໃນເມື່ອ ທໍ່ນ້ຳ ໝົດອາຍຸການໃຊ້ງານ ມັນຈະເຮັດໃຫ້ ທໍ່ແຕກ ທໍ່ຮົ່ວ ຢູ່ເລື້ອຍໆ. ວຽກງານນີ້ ເປັນວຽກງານ ທີ່ໃຊ້ຈ່າຍ ງົບປະມານສູງ ເຮົາຕ້ອງ ມີແຜນການລະອຽດ ໃນ ແຕ່ລະປີ, ສ່ວນ ວັດຖຸ ແລະອຸບປະກອນ ທໍ່ນ້ຳ ທີ່ຈະເອົາມາປ່ຽນຖ່າຍນັ້ນ ກໍຕ້ອງໃຫ້ມີ ຄຸນນະພາບ ແລະ ມີປະສິດທິຜົນສູງ ຕາມມາດຕະຖານສາກົນ ແລະຄຽງຄູ່ກັນນັ້ນ ການ ຕິດຕາມກວດກາ ຄຸນນະພາບຂອງ ວຽກງານໃນສະໜາມ ກໍຕ້ອງໄດ້ເອົາໃຈໃສ່ ເປັນ ພິເສດ ເພື່ອປ້ອງກັນ ບັນຫາ ທີ່ຈະເກີດຂຶ້ນ ໃນຕໍ່ໜ້າ.
- ການຄວບຄຸມ ແຮງດັນນ້ຳ Ajusment of water pressure ກໍເປັນວິທີການນຶ່ງ ທີ່ຊ່ວຍ ໃຫ້ ນ້ຳສູນເສັ່ງລິດຜ່ອນລົງ ໄດ້ຫລາຍທີ່ສຸດ, ເປັນວິທີທີ່ງ່າຍ ແລະ ສາມາດ ດຳເນີນ ການໄດ້ໄວ ທີ່ສຸດ ເຊ່ນ :ລິດຜ່ອນແຮງດັນ ຂອງຈັກສົ່ງນ້ຳລົງ ແລະ ຕິດຕັ້ງ ປະຕູນ້ຳ ລິດຜ່ອນແຮງດັນ ໃສ່ແຕ່ລະຈຸດ ທີ່ມີແຮງດັນນ້ຳສູງ.
- ການຄຸ້ມຄອງ ອ່າງເກັບນ້ຳ Water reservoir ກໍແມ່ນວຽກງານນຶ່ງ ທີ່ສຳຄັນ ທີ່ເຮົາ ຈະຕອ້ງ ໄດ້ເອົາໃຈໃສ່ຕິດຕາມກວດກາ ຢ່າງເປັນລະບົບ ໂດຍປົກກະຕິແລ້ວ ສອງຄັ້ງ ຕໍ່ປີ ໃນການ ກວດກາເບິ່ງ ການຮົ່ວໄຫລຂອງອ່າງ ຫລື ນ້ຳລົ້ນອ່າງ ຍ້ອນລູກລອຍ ໃຊ້ການ ບໍ່ໄດ້.

ການລິດຜ່ອນນ້ຳສູນເສັ່ງທີ່ບໍ່ເກີດຈາກຈຸດຮົ່ວ

Actions to reduce non-physical losses

ບັນຫາໃຫ່ຍ ທີ່ເກີດຂຶ້ນ ໃນຂົງເຂດນີ້ ແມ່ນ ຢູ່ໃນລະບົບ ໝໍ້ແທກນ້ຳ ຂອງລູກຄ້າ ແຕ່ລະຫລັງຄາ ເຮືອນ ຊຶ່ງເຮົາຈະຕອ້ງ ມີວິທີການ ຄວບຄຸມ ດັ່ງຕໍ່ໄປນີ້ :

ລົງສຳຫລວດລູກຄ້າ Field customer survey

ຈຸດປະສົງ ຂອງການລົງ ສຳຫລວດລູກຄ້າ ແຕ່ລະຫລັງຄາເຮືອນ ແມ່ນເພື່ອ ລົງສຳຫລວດ ກວດກາ ສິ່ງທີ່ ຜິດປົກກະຕິ ທາງດ້ານເຕັກນິກ ເຊ່ນ:

- ໝໍ້ແທກນ້ຳຕາຍ, ໝໍ້ແທກນ້ຳອ່ານບໍ່ໄດ້ ຍອ້ນໜ້າມືດ ໜ້າມົວ ຫລື ໜ້າແຕກ, ໝໍ້ແທກ ນ້ຳດິນຖົມ, ໝໍ້ແທກນ້ຳຫງ່ຽງ ບໍ່ຂະໜານກັບໜ້າດິນ, ໝໍ້ແທກນ້ຳຢູ່ໃນເຮືອນ ແລະ ບໍ່ສາມາດ ເຂົ້າໄປອ່ານໄດ້ ແລະ ອື່ນໆ(Defective Water Meter)
- ຊອກຫານ້ຳຮົ່ວ ພາຍນອກ ແລະ ນ້ຳຮົ່ວພາຍໃນ ຢູ່ຕາມ ຂໍ່ຕໍ່, ຂໍ່ງໍ, ປະຕູນ້ຳ, ທໍ່ນ້ຳເຂົ້າເຮືອນ, ຫົວເຈາະທອງ, ປອກກອດທໍ່ ແລະ ໝໍ້ແທກນ້ຳ ຂອງລູກຄ້າ ແຕ່ລະຫລັງຄາເຮືອນ (Leakage in house connection)
- ຊອກຫາ ການລັກໃຊ້ນ້ຳ ໂດຍບໍ່ຜ່ານ ໝໍ້ແທກນ້ຳ, ປົ້ນໝໍ້ແທກນ້ຳ ຫລື ພະຍາຍາມ ເຮັດແນວ ໃດແນວນຶ່ງ ເພື່ອໃຫ້ ໝໍ້ແທກນ້ຳຕາຍ ແລະ ອື່ນໆ (illegal use) ທຸກໆບັນຫາ ທີ່ເຮົາພົບເຫັນ ຕອ້ງໄດ້ເກັບກຳຂໍ້ມູນ ແລ້ວ ເຮັດໃບລາຍງານ ໃຫ້ພາກສ່ວນ ກ່ຽວຂອ້ງໄປ ແກ້ໄຂທັນທີ.

ລົງສຳຫລວດລູກຄ້າລາຍໃຫ່ຍ Big consumer survey

ລູກຄ້າລາຍໃຫ່ຍ ແມ່ນ ລູກຄ້າທີ່ໃຊ້ນ້ຳຫລາຍ ຫລື ໃຊ້ນ້ຳ ເກີນກ່ວາ 2000ມ3 ຕໍ່ເດືອນ ຊຶ່ງແມ່ນ ສຳນັກງານ ອົງການ ກະຊວງ ໂຮງແຮມ ໂຮງໝໍ ແລະ ໂຮງງານ ອື່ນໆ. ໃນຂົງເຂດນີ້ ມີ ນ້ຳຮົ່ວ ພາຍໃນສູງ,ມີການໃຊ້ນ້ຳຢ່າງຟຸມເຟືອຍ ໂດຍສະເພາະ ແມ່ນ ອົງການຈັດຕັ້ງຂອງລັດ ທີ່ໃຊ້ງົບປະ ມານ ຈ່າຍຄ່ານ້ຳແຕ່ລະປີ. ຖ້າວ່າປະປ່ອຍ ໃວ້ຄືແນວນີ້ ແນ່ນອນ ຜົນກະທົບ ທີ່ຕາມມາ ກໍແມ່ນ ເກີດວິກິດການ ບັນຫາຂາດນ້ຳໃຊ້ ໃນທົ່ວລະບົບນ້ຳປະປາ. ຈຸດປະສົງ ຂອງວຽກງານນີ້ ກໍຄ້າຍຄືກັນ ກັບ ຂໍ້ 6.3.1 ຕ່າງແຕ່ວ່າ ເຮົາຕ້ອງລົງກວດກາເປັນປະຈຳ ດີທີ່ສຸດ ອາທິດນຶ່ງ ຕໍ່ນຶ່ງຄັ້ງ ຍິ່ງເປັນການ ດີ. ບັນຫາທີ່ຄວນເອົາໃຈໃສ່ ໃນວຽກງານນີ້ ແມ່ນ ການຕິດຕັ້ງ ໝໍ້ແທກນ້ຳ ບໍ່ຖືກຕາມມາດຕະຖານ ເຕັກນິກ ເຊ່ນວ່າ ບໍ່ມີທໍ່ນ້ຳສັ້ນ ຫລື ທໍ່ນ້ຳສັ້ນ ບໍ່ໄດ້ ມາດ ຕະຖານ, ຂະໜາດ ຂອງ ໝໍ້ແທກນ້ຳ ບໍ່ເໝາະສົມ ກັບ ການຊົມໃຊ້ນ້ຳ ຂອງລູກຄ້າ, ໝໍ້ແທກນ້ຳ ຂະໜາດໃຫ່ຍ ແຕ່ໃຊ້ນ້ຳໜ້ອຍ ຫລື ໝໍ້ແທກນ້ຳນ້ອຍ ພັດໃຊ້ນ້ຳຫລາຍ (Adiquate size for big consumer) . ສະນັ້ນ, ຈຶ່ງເຮັດໃຫ້ ຄວາມທ່ຽງຕົງ ຂອງໝໍ້ແທກນ້ຳ ບໍ່ແນ່ນອນ.

ປ່ຽນຖ່າຍໝໍ້ແທກນ້ຳ Replacement of defective meters

ຕາມປົກກະຕິແລ້ວ ໝໍ້ແທກນ້ຳເກ່ົາ ທີ່ມີອາຍຸການໃຊ້ງານເກີນກວ່າ 8ປີ ຂຶ້ນໄປຈະບໍ່ມີ ຄວາມ ທ່ຽງຕົງ ແລະ ຊັດເຈນແນ່ນອນ. ສະນັ້ນ, ຈຶ່ງຈຳເປັນ ຈະຕ້ອງມີແຜນການລະອຽດ ໃນແຕ່ລະປີ ເພື່ອປ່ຽນຖ່າຍ ແລະ ຄຽງຄູ່ກັນນັ້ນ ກໍຄວນຍົກຍ້າຍ ໝໍ້ແທກນ້ຳ ທີ່ບໍ່ສາມາດ ເຂົ້າຫາໄດ້ ຍ້າຍ ໄປໄວ້ບ່ອນ ທີ່ເໝາະສົມ ເພື່ອສະດວກ ໃນການອ່ານ ແລະ ຈົດກ່າຍ.

ທົດສອບໝໍ້ແທກນ້ຳ Water meter tests and field survey

ໝໍ້ແທກນ້ຳ ແຕ່ລະໜ່ວຍ ປຽບດັ່ງ ຈັກຄິດໄລ່ເງິນຂອງ ພວກເຮົາ ສະນັ້ນ, ໜ່ວຍງານ ທີ່ມີໜ້າທີ່ຮັບ ຜິດຊອບ ຕອ້ງໄດ້ ເອົາໃຈໃສ່ ໃນການຄຸ້ມຄອງ ຢ່າງເຂັ້ມງວດ ເຊ່ນ:

- ໝໍ້ແທກນ້ຳ ແຕ່ລະໜ່ວຍ ກ່ອນຈະ ເອົາໃປຕິດຕັ້ງ ຫລື ປ່ຽນຖ່າຍ ກໍຕ້ອງໄດ້ຜ່ານການທົດສອບ ຢູ່ ຫອ້ງທົດລອງເສັ້ງກ່ອນ ເພື່ອປະເມີນຫາຄ່າ ຄວາມທ່ຽງຕົງ ຄວາມຊັດເຈນ ຂອງ ໝໍ້ແທກນ້ຳ ໃຫ້ຖືກຕ້ອງຕາມ ມາດຕະຖານ ໝາຍວ່າ ບ່ໃຫ້ຊ້ຳ ແລະບ່ໃຫ້ໄວ.
- ທົດສອບໝໍ້ແທກນ້ຳ ຢູ່ສະໜາມ ດ້ວຍ ເຄື່ອງທົດສອບ ເຄື່ອນທີ່ Mobile flow meter ໃນເມື່ອ ມີການສົງໃສວ່າ ຕິວເລກການໃຊ້ນ້ຳ ຜິດປົກກະຕິ ຫລື ລູກຄ້າ ມີການຈົ່ມວ່າ ເລື້ອຍໆ ກ່ຽວກັບ ການຈ່າຍຄ່ານ້ຳແພງ ເຮົາຄວນ ລົງໄປທົດສອບຢູ່ສະໜາມເລີຍ.
- ເກັບກຳຂໍ້ມູນ ໝໍ້ແທກນ້ຳ ແຕ່ລະຊະນິດ ແຕ່ລະຂະໜາດ ແລະ ລະຍະເວລາ ທີ່ໃຊ້ງານ ເພື່ອ ຂຶ້ນແຜນປ່ຽນຖ່າຍ ໝໍ້ແທກນ້ຳ.

ຄຸ້ມຄອງ ແລະ ປັບປຸງລະບົບ ພິມໃບບິນເກັບເງິນຄ່ານ້ຳ

Upgrade of the IT billing systemand customer management

ລະບົບໃບບິນເກັບເງິນ ກໍເປັນຂອດນິ້ງທີ່ສຳຄັນ ໃນການຄຸ້ມຄອງ ແລະລົດຜ່ອນ ນ້ຳສູນເສັ້ງ ການຈົດກ່າຍຕິວເລກ ໃຫ້ຖືກຕ້ອງ ຊັດເຈນ ການພິມບິນເກັບເງິນ ກໍໃຫ້ຖືກຕ້ອງ ແລະທັນເວລາ ບັນຫານີ້ ກໍເພື່ອ ປ້ອງກັນການຈົ່ມວ່າຈາກລູກຄ້າ, ສະນັ້ນເຮົາຕ້ອງປັບປຸງໃຫ້ດີຂຶ້ນກ່ວາເກົ່າ.

• ການແຍກຜູ້ໃຊ້ນ້ຳຄົວເຮືອນ ແລະ ພາກສ່ວນໃຊ້ນ້ຳຂອງສຳນັກງານ ອົງການລັດ

- ຜ່ານມາຈາກການເກັບສຳຫຼວດ ເອົາຂໍ້ມູນຈາກຜູ້ໃຊ້ນ້ຳປະປາ ໃນນະຄອນຫຼວງວຽງຈັນ ເຫັນວ່າ ບາງສຳນັກງານອົງການຂອງລັດ ມີການໃຊ້ນ້ຳຮ່ວມກັນ ເຊັ່ນວ່າ: ໃນບາງສຳນັກ ງານອົງການ ຂອງລັດ ແລະ ຄອບຄົວທີ່ພັກອາໃສ ຢູ່ໃນບໍລິເວນຂອງສຳນັກງານອົງການ ຂອງລັດນັ້ນ. ສະນັ້ນເຫັນວ່າການໃຊ້ນ້ຳ ຈາກສຳນັກງານອົງການຂອງລັດ ເຫັນວ່າສູງຜິດ ປົກກະຕິ ເພື່ອໃຫ້ເຫັນ ແຈ້ງວ່າ ຈາກສຳນັກງານອົງການຂອງລັດ ມີການໃຊ້ນ້ຳຢ່າງປະຢັດ ແລະ ໝາະສົມກັບຄວາມຕ້ອງການໃຊ້ນ້ຳປະປານັ້ນ ພວກເຮົາຄວນແຍກລະຫວ່າງ ການ ໃຊ້ນ້ຳ ຈາກສຳນັກງານອົງການຂອງລັດກັບຄົວເຮືອນອອກ ທີ່ຢູ່ໃນບໍລິເວນຂອງສຳນັກ ງານ ອົງການຂອງລັດ ແລະ ຄວນແຍກຫ່ວງການໃຊ້ຈ່າຍຄ່ານ້ຳປະປາ ອອກຈາກກັນອີກ ດ້ວຍ; ຊຶ່ງຈະສາມາດເຮັດໃຫ້ຜູ້ໃຊ້ນ້ຳຢູ່ຕາມຄົວເຮືອນ ມີການປະຫຍັດນ້ຳ ແລະ ຈະບ່ ປ່ອຍໃຫ້ນ້ຳປະປາຖິ້ມເສຍ ເນື່ອງຈາກວ່າ ເຂົາເຈົ້າເອງນັ້ນຈະເປັນຜູ້ຈ່າຍຄ່ານ້ຳປະປາ ແລະ ອີກຢ່າງໜຶ່ງກໍ່ເປັນການຫຼຸດຜ່ອນຄ່າໃຊ້ຈ່າຍ ນ້ຳປະປາຈາກສຳໜັກງານອົງການ ຂອງລັດ.

5.2 ຄຸນະພາບນ້ຳໃນອານາຄົດ

- **ຄຸນະພາບຂອງການບໍລິການນ້ຳປະປາຕໍ່ລູກຄ້າ**

1. ຕ້ອນຮັບລູກຄ່ຳທີ່ມາພົວພັນວຽກຕາມແບບມະນຸດສຳພັນທີ່ດີ .
2. ຜະລິດນ້ຳປະປາເພື່ອປະຊາຊົນໃຫ້ມີຄວາມສະອາດປອດໄພ .
3.ສຳຫຼວດ;ວັດແທກ;ອອກແບບຖືກຕ້ອງຕາມເຕັກນິກ;ທັນເວລາ .
4.ຄຳນວນລາຄາຕາມລະບຽບຫຼັກການກຳນົດໄວ້ແລະຖືກຕ້ອງຕາມເວລາວາງໃວ້ .
5.ຕິດຕັ້ງນ້ຳເຂົ້າເຮືອນ;ສອ້ມແປງທໍ່ແຕກ;ວາງທໍ່ຕາມຖະໜົນຫົນທາງໃຫ້ຖືກຕ້ອງຕາມ ເຕັກນິກແລະທັນເວລາ .
6.ຈົດຕົວເລກໜ້ແທກນ້ຳໃຫ້ຊັດເຈນ; ລາຍງານໜ້ແທກນ້ຳເດີນບໍ່ປົກກະຕິ , ເປ່ເພ; ເສຍ ຫາຍໃຫ້ທັນສະພາບການ .
7.ເກັບເງິນຄ່ານ້ຳຢ່ຳໆຊື່ສັດບໍລິສຸດ,ເກັບເງິນແລ້ວຕ້ອງຖອກເຂົ້ຳຄັງເງິນສົດຕາມລະບຽບ ການວາງໃວ້ .
8.ວົງຈອນເອກະສານຕ້ອງມີກຳນົດເວລາຊັດເຈນ,ເອກະສານຜ່ານແຕ່ລະພະແນກກ່ຽວຂ້ອງ ໃຊ້ເວລາເທ່ຳໃດ;ໃຜເປັນຜູ້ມີສິດເຊັນ .
9.ທຸກຄ້ັງທີ່ລູກຄ້ຳຈ່ຳຍເງິນຕ້ອງມີໃບຮັບເງິນໃຫ້ລູກຄ້ຳເພື່ອເປັນຫຼ້ກຖານຈ່ຳຍເງິນ .
10.ປະຕິບັດໂມງເວລາລັດຖະການຢ່ຳງເຂັ້ມງວດ .

5.3 ລາຄານ້ຳ.

- **ລະບົບລາຄານ້ຳປະປາໃນອານາຄົດ.**

❖ ຈຸດປະສົງແລະເປ້ຳໝາຍຂອງໂຄງສ້ຳງລາຄາ.

➢ ຈຸດປະສົງຕົ້ນຕໍຂອງລັດວິສາຫະກິດນ້ຳປະປາ, ແມ່ນຮັບໃຊ້ແລະບໍລິການສັງຄົມ.ດ້ວຍການ ສະໜອງນ້ຳສະອາດໃຫ້ແກ່ສັງຄົມ, ບໍ່ວ່ຳຜູ້ທຸກ ຫຼື ບຸກຄົນທົ່ວໄປກໍ່ສາມາດຊົມໃຊ້ນ້ຳປະປາໄດ້.

➢ ເພື່ອເຮັດໃຫ້ ວິສາຫະກິດ ສາມາດເຄື່ອນໄຫວ ແລະມີຄວາມສາມາດກ້ຳມຕົນເອງ ທາງດ້ານ ຖານະການເງິນ,

➢ ເພື່ອໃຫ້ວິສາຫະກິດສາມາດ ປະກອບສ່ວນພັນທະຕໍ່ລັດໄດ້ຕາມລະບຽບກົດໝາຍ.

❖ ໂຄງປະກອບລາຄານ້ຳ (ມີ3ພາກໃຫ່ຍ).

1) ຕົ້ນທຶນການຜະລິດ ແລະ ການບໍລິການ.

A. ວັດຖຸດິບຕົ້ນຕໍແລະລາຍຈ່ຳຍຕົ້ນຕໍເປັນຕົ້ນ: ຫີນສົ້ມ, ຢາຂ້ຳເຊ້ືອ, ລາຍຈ່ຳຍຄ່ຳໄຟຟ້ຳ

B. ແຮງງານເງິນເດືອນ, ສະຫວັດດີການຕ່າງໆ

C. ມູນຄ່າຫຼັ່ງຫຼັ່ງພື້ນຖານ ຊັບສິນບັດຄີງທີ່ຕາມມູນຄ່າເດີມ, ເຊິ່ງມູນຄ່າດັ່ງກ່າວ ຍັງບໍ່ທັນສ່ອງແສງ ເຖິງ ມູນຄ່າປະຈຸບັນ ຂອງຊັບສິນບັດຄີງທີ່ເທື່ອ.ແລະບໍ່ສາມາດຈະລິງຫືນໃໝ່ໄດ້. ດັ່ງນັ້ນຈຶ່ງ ປັນສາຍເຫດ ຕົ້ນຕໍ ຂອງຖານະການເງິນ ວິສາຫະກິດ ນ້ຳປະປາ ບໍ່ສາມາດ ຈະລິງຫືນ ກໍ່ສ້າງ ແລະຂະຫຍາຍລະບົບນ້ຳປະປາໄດ້.

2) ລາຍຈ່າຍທາງດ້ານການເງິນ (ດອກເບັຍເງິນກູ້) . ປະຈຸບັນ ອັດຕາສ່ວນ ເງິນກູ້ ຕ່ຳຫືນ ສູງ, ສະນັ້ນ ວິສາຫະກິດ ຕ້ອງໄດ້ຮັບພາລະ ຈ່າຍ ດອກເບັຍເງິນກູ້ ສູງ ແລະ ປະກອບເຂົ້າໃນ ໂຄງປະກອບລາຄານ້ຳ.

3) ກຳໄລກຳນົດໝາຍ ແລະອາກອນທຸລະກິດ

ທິດທາງໂຄງສ້າງລາຄານ້ຳ.

ປະເພດ	ເນື້ອໃນ	ຂອບເຂດການນຳໃຊ້	ລາຄາ ກີບ/ມ^3	%ເພີ່ມຂຶ້ນ ແຕ່ລະປີ	2004 →	2007
I	ຄົວເຮືອນ ແລະສຳນັກງານ ບໍລິຫານລັດ	1 - 30 > 30	605 835	10 % 15 %	10% 15%	
II	ວຸກການຄ້າ,ທຸລະກິດ,ສະ ຖານທູດ,ບ້ານພັກຕ່າງປະເທດ	1 - 50 > 50	855 1035	15 % 20 %	15% 20%	
	ລາຄາສະເລ່ຍ		750			

- **ການພິຈາລະນາເຖິງຜູ້ໃຊ້ນ້ຳປະປາໃນຄົວເຮືອນ ແລະ ຜູ້ມີລາຍໄດ້ໜ້ອຍ.**

ທິດທາງແບ່ງເປັນ 2 ປະເພດແມ່ນມີການກະທົບຕໍ່ຜູ້ຊົມໃຊ້ນ້ຳຄື:

1. ຕໍ່ລູກຄ້າສຳລັບຄົວເຮືອນ ແລະ ອົງການລັດ. ລາຄາຈະສູງຂຶ້ນ ເຮັດໃຫ້ຜູ້ຊົມໃຊ້ນ້ຳ ເອົາໃຈ ໃສ່ຕໍ່ການນຳໃຊ້ນ້ຳມີການປະຢັດ, ແລະໃສ່ໃຈຕໍ່ ລາຍຈ່າຍທີ່ຕ້ອງສຳລະ.ແລະອີກປະການ ໜຶ່ງລູກຄ້າປະເພດນີ້ກວມເປີເຊັນສູງນັບທັງກົງເຕີແລະບໍລິມາດການໃຊ້ນ້ຳ.
2. ສຳລັບລູກຄ້າປະເພດ 2 ແມ່ນປະເພດທຸລະກິດແລະອົງການ,ບຸກຄົນຕ່າງປະເທດ. ປົກກະຕິ ລູກຄ້າປະເພດນີ້ ແມ່ນໃສ່ໃຈຢູ່ແລ້ວຕໍ່ກັບບັນຫາການນຳໃຊ້ນ້ຳ. ສຳລັບລາຄາປະເພດນີ້ ແມ່ນຖຸດລົງ, ແລະບໍ່ມີຜົນກະທົບຫັ້ງ ຕໍ່ ກັບການນຳໃຊ້ນ້ຳແບບປະຢັດ. ລູກຄ້າປະເພດນີ້ ກວມເປີເຊັນຕ່ຳນັບທັງກົງເຕີແລະປະລິມານການນຳໃຊ້ນ້ຳ.

- **ການພິຈາລະນາ ສຳລັບຜູ້ໃຊ້ນ້ຳປະປາ ໃນຄົວເຮືອນ ແລະ ຜູ້ທຸກຈົນ.**

ໂຄງສ້າງລາຄານ້ຳ ທີ່ປະຕິບັດ ຢູ່ປະຈຸບັນນີ້, ສຳລັບປະຊາຊົນ ທີ່ທຸກຈົນ, ມີລາຍຮັບຕ່ຳ ກໍ່ສາມາດ ສຳລະຄ່ານ້ຳປະປາໄດ້. ຕົວຢ່າງ: ຜູ້ທີ່ມີລາຍຮັບ ສະເລ່ຍ 100 000 ກີບ / ເດືອນ, ການໃຊ້ ນ້ຳປະປາ ຈຳນວນ 15 $ม^3$/ ເດືອນ ຈະຕ້ອງຈ່າຍ ຄ່ານ້ຳ ມູນຄ່າ 3 725 ກີບ / ເດືອນ. ໝາຍຄວາມວ່າ ລາຍຈ່າຍການໃຊ້ນ້ຳປະປາ ກວມພຽງແຕ່ 3 - 5 % ຂອງລາຍຮັບເທົ່ານັ້ນ. ສະນັ້ນຈຶ່ງເວົ້າໄດ້ວ່າ : ໂຄງສ້າງລາຄານີ້ ສຳລັບຜູ້ທຸກຈົນກໍ່ສາມາດໃຊ້ນ້ຳປະປາໄດ້.
ຖ້າເບິ່ງໃນແງ່ທຸລະກິດຢ່າງດຽວ, ໂຄງສ້າງລາຄານີ້ແມ່ນລາຄາເກື້ອກຸນ ບໍ່ມີເສດຖະກິດ. ແຕ່ຖ້າເບິ່ງໃນແງ່ສັງຄົມ,ແມ່ນສັງຄົມໄດ້ຮັບຜົນປະໂຫຍດຫຼາຍ.ເຮັດໃຫ້ສັງຄົມມີຊີວິດທີ່ດີຂຶ້ນ.

➡ ຜົນກະທົບ ຈາກລາຄານ້ຳທີ່ນຳໃຊ້ປະຈຸບັນ,ສ່ວນໃຫ່ຍເຫັນວ່າລາຄານ້ຳຕ່ຳ,ແລະຄວາມ ສາມາດໃນການນຳໃຊ້ ແລະ ສຳລະ ທົ່ວໄປເຫັນວ່າມີຫຼາຍ, ຈາກນັ້ນ ຈຶ່ງມີທັດສະນະ ການນຳໃຊ້ນ້ຳ ແບບຟຸມເຟືອຍ. ຍັງຂາດແນວຄິດ ປະຢັດ ເພື່ອຕົນເອງ, ເພື່ອປະເທດຊາດ ແລະເພື່ອຄວາມຢູ່ລອດຂອງສັງຄົມ.

5. 4 ການສົ່ງເສີມ ແລະ ການພົວພັນກັບລູກຄ້າທີ່ດີ

- **ການຕັ້ງເປົ້າໝາຍ ການປະຫຍັດນ້ຳ ແລະ ການຄຸ້ມຄອງນ້ຳໃຫ້ພຽງພໍ ໃນການໃຊ້**

- ປະຫຍັດນ້ຳໃຫ້ມີນ້ຳພຽງພໍ ຕາມແຜນການຂະຫຍາຍລະບົບນ້ຳປະປາ ແລະ ໃຫ້ຜູ້ໃຊ້ ນ້ຳໄດ້ຈ່າຍລາຄານ້ຳປະປາ ໄດ້ຢ່າງປະຫຍັດ ແລະ ມີປະສິດທິຜົນດີ.
- ການປະຫຍັດນ້ຳ ແລະ ຄຸ້ມຄອງການໃຊ້ນ້ຳໃຫ້ພຽງພໍກັບຜູ້ໃຊ້ນ້ຳ ຍັງເປັນການຫຼຸດ ຜ່ອນການລົງທຶນຂອງລັດທະບານລາວ ໃນການຂະຫຍາຍລະບົບນ້ຳປະປາກໍ່ຄືເພື່ອສົ່ງ ເສີມໃຫ້ເສດທະກິດຂອງຊາດ ໃຫ້ມີຄວາມໝັ້ນຄົງ.

- **ຄວາມໂປ່ງໃສຂອງບໍລິສັດນ້ຳປະປາ ຕໍ່ລູກຄ້າ.**

- **ບົດລາຍງານປະຈຳປີ ຂອງບໍລິສັດນ້ຳປະປານະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກຳແພງນະຄອນວຽງຈັນ
ພະແນກ ຄົມມະນາຄົມ ຂົນສົ່ງ
ໄປສະນີ ແລະ ກໍ່ສ້າງ
ລັດວິສາຫະກິດນ້ຳປະປາລາວ

ເລກທີ 080 /ນປລ

ບົດລາຍງານຫຍໍ້ ການເຄື່ອນໄຫວ ທຸລະກິດ ປະຈຳສົກປີ 2002 ແລະ ແຜນການ ສົກປີ 2003.

I. ສະພາບລວມ:

ໃນການດຳເນີນທຸລະກິດປະຈຳສົກປີ 2002 ຜ່ານມາພາຍໃຕ້ການຊີ້ນຳຈາກ ສະພາບໍລິຫານແລະພະແນກຄຂປກາກຳແພງ,ພາຍໃຕ້ການນຳພາຂອງຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ສົມທົບກັບອົງຄະນະພັກກຳແພງ ຄະນະພັກບໍລິສັດ ອົງການຈັດຕັ້ງມະຫາຊົນ ກໍ່ຄື ພະນັກງານ,ກຳມະກອນໄດ້ສຸມໃສ່ໃນການປະຕິບັດວຽກງານດ້ານການນຳພາການເມືອງແນວຄິດ, ດ້ານວິຊາສະເພາະ ແລະ ວຽກງານທີ່ຂັ້ນເທິງມອບໝາຍ ສາມາດບັນລຸຜົນສຳ ເລັດ ດັ່ງມີ ລາຍລະອຽດແຕ່ລະດ້ານລຸ່ມນີ້:

1/.ດ້ານການຈັດຕັ້ງ

ລັດວິສາຫະກິດນ້ຳປະປາລາວປະກອບດ້ວຍຜູ້ອຳນວຍການ1ທ່ານ,ຮອງຜູ້ອຳນວຍການ 3 ທ່ານ, 5 ພະແນກ, 4 ສາຂາ, 4 ໂຮງງານຜະລິດ, 2 ໂຄງການ, 1 ກອງກໍ່ສ້າງ ແລະ ສ້ອມແປງ ລວມພະນັກງານທັງຫມົດ 354 ຄົນ, ຍິງ 59 ຄົນ, ສັນຍາຈ້າງ 68 ຄົນ, 1 ຫນ່ວຍພັກ ສະມາຊິກ ສົມບູນ 36 ສະຫາຍ,ສະມາຊິກສຳຮອງ11 ສະຫາຍ, ຍິງ 8 ສະຫາຍ ລວມ 47 ສະຫາຍ, ສະມາຊິກກຳມະບານມີສະມາຊິກທັງຫມົດ 317 ສະຫາຍ, ຍິງ 52 ສະຫາຍ, ຊາວຫນຸ່ມປະຊາຊົນປະຕິວັດລາວມີສະມາຊິກທັງຫມົດ 134 ສະຫາຍ, ຍິງ 38 ສະຫາຍ, ສະຫະພັນແມ່ຍິງລາວມີສະມາຊິກທັງຫມົດ 59.

II. ຜົນງານ ປີ 2002.

1ວຽກງານນຳພາແນວຄິດ ແລະ ສຶກສາອົບຮົມ:

ໃນແຕ່ລະອົງການຈັດຕັ້ງກໍ່ໄດ້ດຳເນີນຊີວິດຂອງຕົນເປັນປົກກະຕິ, ຄະນະອຳນວຍການ, ຫົວໜ້າພະແນກ ແລະ ອົງການຈັດຕັ້ງມະຫາຊົນໄດ້ຮ່ວມຊີວິດ ສອງອາທິດ 1 ເທື່ອ, ສ່ອງແສງຢູ່ກຳແພງນະຄອນ ເປັນປະຈຳ.

- ໄດ້ເປີດຝຶກອົບຮົມວິຊາສະເພາະຂອງບາງຂະແໜງການໃຫ້ພະນັກງານ ໃນກຳແພງ ແລະ ຕ່າງແຂວງ ເພື່ອຍົກລະດັບການຄຸ້ມຄອງບໍລິການໃຫ້ມີປະສິດທິພາບສູງຂຶ້ນເທື່ອລະກ້າວ.
- ໄດ້ຈັດຕັ້ງຮຽນເອກະສານຄຸນທາດການເມືອງ,ຄຸນສົມບັດສົມທຳປະຕິວັດແບບແຜນດຳລົງຊີວິດແລະວິທີເຮັດວຽກຂອງພະນັກງານ.
- ຈັດຕັ້ງການຮຽນ ເອກະສານມະຕິ 4 ສະໄໝທີ 7 ຂອງພັກ.
- ໄດ້ຈັດຕັ້ງຮຽນເອກະສານກ່ຽວກັບຄວາມສາມະຄີຮ່ວມມືຮອບດ້ານ ລາວ - ຫວຽດນາມ.
- ໄດ້ຈັດຕັ້ງໜ່ວຍປ້ອງກັນເວນຍາມເປັນປົກກະຕິໃນໄລຍະ ວັນສຳຄັນມາຮອດປະຈຸບັນ ກໍ່ມີການເວນຍາມເປັນປົກກະຕິ.
- ໄດ້ມີການປະສານສົມທົບ ລະຫວ່າງ ພັກ-ລັດ, ອົງການຈັດຕັ້ງມະຫາຊົນ ເຮັດໃຫ້ລະບົບ ການຈັດຕັ້ງດ້ານການເມືອງເຄື່ອນໄຫວເປັນປົກກະຕິ.
- ໄດ້ມີການດຳເນີນຊີວິດການເມືອງ ແລະ ມີການຂຶ້ນແຜນການວຽກງານ ສະໜຸບຖອດຖອນບົດຮຽນ.
- ໄດ້ປັບປຸງການຈັດຕັ້ງ ແລະ ຊັບຊ້ອນພະນັກງານຂັ້ນນຳໃນບາງພະແນກການ ເພື່ອໃຫ້ ສອດຄ່ອງກັບສະພາບການຕົວຈິງ.
- ໄດ້ຝຶກອົບຮົມ ແລະ ທັດສະນະສຶກສາຢູ່ຕ່າງປະເທດ.

2. ວຽກງານການຜະລິດແລະບໍລິການ :

- ນ້ຳຜະລິດ ໄດ້	41.470.633 ມ3.
- ນ້ຳຈຳໜ່າຍ ໄດ້	28.728.711 ມ3.
- ເປີເຊັນນ້ຳເສັຍ	31%.
- ຕິດຕັ້ງນ້ຳເຂົ້າໃໝ່	1.700 ໜ່ວຍ.
- ສ້ອມແປງພາຍນອກ	3.314 ບ່ອນ.
- ຍົກຍ້າຍທໍ່ອອກຈາກເສັ້ນທາງ ເບີ 2 ສຳເລັດ	100%.

3. ວຽກການເງິນ :

* ລາຍຮັບລວມ : 19.977.873.771 ກີບ, ສົມທຽບໃສ່ແຜນການໄດ້ 102,15%.

4. ປະຕິບັດລາຍຈ່າຍທຸລະກິດ ລວມ : 19.200.113.215 ກີບ,ສົມທຽບໃສ່ແຜນການໄດ້ 96,74%.

- ກຳໄລ 777.760.556 ກີບ.
- ມອບພັນທະງົບປະມານ ໄດ້ 1.485.526.829 ກີບ.

5. ໜີ້ຕ້ອງຮັບ - ຕ້ອງສົ່ງ :

- ໜີ້ຕ້ອງຮັບ ລວມ 10.127.266.619 ກີບ.
- ➢ໃນນີ້ໜີ້ຂອງລັດແມ່ນ 7.782.281.613 ກີບ.
- ໜີ້ຕ້ອງສົ່ງ ລວມ 5.561.200.628 ກີບ.
- ໜີ້ຕ້ອງສົ່ງ ເປັນເງິນຕຣາ 103.331 ໂດລາ.

6. ວຽກງານພົວພັນສາກົນ :

ໃນໄລຍະຜ່ານມາ ລັດວິສາຫະກິດນ້ຳປະປາລາວ ພວກເຮົາກໍ່ໄດ້ມີການຮ່ວມມືນຳອົງການສາກົນ ເປັນຕົ້ນຄື:

6.1 : ໂຄງການຮ່ວມມືກັບຝະຣັ່ງ:

1./. ພາກປະຕິບັດວຽກງານປີ 2002 ຂອງໂຄງການຂະຫຍາຍຕາໜ່າງສະໜອງນ້ຳປະປາ.

ກ. ວຽກຂະຫຍາຍຕາໜ່າງສະໜອງນ້ຳປະປາກຳແພງນະຄອນວຽງຈັນ.

ໂຄງການສຶກສາຂໍ້ມູນກ່ຽວກັບຄວາມເປັນໄປໄດ້ຂອງໂຄງການກໍ່ສ້າງສູນຝຶກອົບຮົມຂະແໜງນ້ຳ ປະປາແລະສຸຂະພິບານສັນຍາໃຫ້ທຶນ ເລກທີ CLA 1001-01 ລົງວັນທີ 25/10/1994.

- ໄດ້ເຊັນສັນຍາກັບບໍລິສັດວິສາວະກອນທີ່ປຶກສາ Office International de Leau ໃນວັນທີ 24/4/2002 ມູນຄ່າ 98.550 ເອີໂຣ.

6.2: ໂຄງການຮ່ວມມືກັບທະນາຄານໂລກ :

ເປັນໂຄງການຊ່ວຍເຫຼືອຕ່າງແຂວງເຊິ່ງປະກອບດ້ວຍແຂວງອຸດົມໄຊ,ຜົ້ງສາລີ,ຫຼວງນ້ຳທາ ໂດຍຮູບ ການທີ່ລັດວິສາຫະກິດນ້ຳປະປາລາວເປັນຜູ້ປະສານງານແລະຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ຮອດປະຈຸບັນການກໍ່ສ້າງໂຮງງານຢູ່3ແຂວງດັ່ງກ່າວໄດ້ສຳເລັດ.ແຕ່ແຂວງອຸດົມໄຊຍັງໃຫ້ພວກເຮົາ ສືບຕໍ່ຊ່ວຍໃນການປະສານງານກັບທະນາຄານໂລກແລະຊ່ວຍດ້ານວິຊາການຄຸ້ມຄອງທຸລະກິດຂອງ ແຂວງເປັນຕົ້ນການຝຶກອົບຮົມພະນັກງານ.

6.3: ໂຄງການຮ່ວມມືກັບອົງການ JICA.

ໃນເດືອນ2 ປີ 2003 ອົງການ JICA ຈະໄດ້ສົ່ງຊ່ຽວຊານມາປະຕິບັດໂຄງການສຳຫຼວດລະບົບໂຮງ ງານນ້ຳປະປາແຫ່ງໃໝ່ແລະລະບົບສາຍທໍ່,ໂຄງການນີ້ຈະສຳເລັດໃນເດືອນ 12/2003.

6.4 : ໂຄງການຮ່ວມມືລາວ-ແບນຊິກ:

ໃນປີ 2002 ໂຄງການຮ່ວມມືລາວ-ແບນຊິກ ໄດ້ໃຫ້ທຶນ US$ 104.600 ເພື່ອໃຊ້ເຂົ້າໃນວຽກງານ ~ ຕ່າງໆ.

6.5: <u>ໂຄງການຮ່ວມມື ລາວ-ຈີນ :</u>

- ກ່ຽວກັບບົດວິພາກເສດຖະກິດເຕັກນິກສ້າງໂຮງງານ ຜະລິດທໍ່ PVC ປະຈຸບັນ ຝ່າຍຈີນ ຂໍໂຈະຊົ່ວ

ຄາວ.

III. <u>ສັງເກດຕີລາຄາດ້ານດີ ແລະ ດ້ານອ່ອນ</u>

* <u>ດ້ານດີ:</u>

1). ນັບແຕ່ຄະນະອຳນວຍການຕະຫຼອດຮອດພະນັກງານ,ກຳມະກອນຂອງພວກເຮົາໄດ້ມີຄວາມສາມະຄີຮັກແພງແລະມີຄວາມເປັນເອກະພາບໃນໜ້າທີ່ວຽກງານ,ເຮັດໃຫ້ພະນັກງານ,ກຳມະກອນເຊື່ອໝັ້ນຕໍ່ການນຳພາ,ມີຄວາມຫ້າວຫັນເຮັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍໃຫ້ເປັນຢ່າງດີ.

2).

ລັດວິສາຫະກິດນ້ຳປະປາລາວຂອງພວກເຮົາກໍ່ໄດ້ປັບປຸງແບບແຜນວິທີການເຮັດວຽກຂອງແຕ່ລະພະແນກ,ແຕ່ລະພາກສ່ວນເປັນຕົ້ນໄດ້ຫັນ ກອງກໍ່ສ້າງ-ຂະຫຍາຍ ໄປສູ່ການມອບໝ້າແຮງງານ.

3). ເຖິງວ່າລັດຖະບານບໍ່ທັນໄດ້ອະນຸຍາດປັບປຸງລາຄານ້ຳປະປາຕາມຄວາມເໝາະສົມແຕ່ພະນັກງານກຳມະກອນພວກເຮົາຍັງໄດ້ສູ້ຊົນຜະລິດນ້ຳປະປາຮັບໃຊ້ສັງຄົມເປັນປົກກະຕິແລະໄດ້ມອບພັນທະງົບປະມານ ໃຫ້ລັດ ເປັນປົກກະຕິ.

4). ໄດ້ປັບປຸງຊີວິດການເປັນຢູ່ຂອງພະນັກງານ ໂດຍໄດ້ເພີ້ມຄ່າຄອງຊີບໃຫ້ພະນັກງານ,ກຳມະກອນ ໃຫ້ສອດຄ່ອງກັບສະພາບເງິນເຟີ້ໃນປະຈຸບັນ ໄດ້ລະດັບໃດໜຶ່ງ.

5). ໄດ້ເລັ່ງລັດທວງໜີ້ສິນຄ່ານ້ຳປະປາແລະອື່ນໆ.

* <u>ດ້ານອ່ອນ:</u>

1) ມີພະນັກງານ-ກຳມະກອນຈຳນວນນຶ່ງ ຍັງຮັບຮູ້ເຊື່ອມຊ້ຳ ຕໍ່ທິດທາງການປ່ຽນແປງໃໝ່ຂອງພັກ ຍ້ອນ ລະດັບທາງທິດສະດີການເມືອງ ພະນັກງານ-ກຳມະກອນ ຂອງພວກເຮົາຍັງຕ່ຳ.

2) ສະຕິເຄົາລົບຕໍ່ລະບຽບວິໃນ, ສະຕິຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານຂອງພະນັກງານ-ກຳມະກອນ ຈຳນວນໜຶ່ງຍັງອ່ອນ.

3) ການຕອບສະໜອງນ້ຳໃຫ້ແກ່ສັງຄົມຍັງບໍ່ພຽງພໍກັບຄວາມຕ້ອງການໃນບາງບ່ອນ-ບາງເຂດກໍ່ເພາະຍ້ອນວ່າຄວາມສາມາດການຜະລິດນ້ຳຍັງຈຳກັດ, ການຕິດຕັ້ງສ້ອມແປງ ບາງບ່ອນບໍ່ໄດ້ມາດຕະຖານເຕັກນິກ, ບາງບ່ອນບໍ່ທັນເວລາ.

4) ການນຳພາອົງການຈັດຕັ້ງມະຫາຊົນຍັງບໍ່ທັນໄດ້ດີ.

IV. <u>ວິທີການແກ້ໄຂ:</u>

1) ກ່ອນອື່ນໝົດຕ້ອງເພີ້ມທະວີການນຳພາທາງດ້ານການເມືອງແນວຄິດຂອງພະນັກງານ,ກຳມະກອນ ໃຫ້ເຂົ້າໃຈແຈ້ງຕໍ່ໜ້າທີ່ວຽກງານ ມີນ້ຳໃຈຮັກວຽກງານ, ມີຄວາມຮັບຜິດຊອບສູງ, ມີແນວ

ຄິດຫຼັກໝັ້ນ, ອຸ່ນອ່ຽນທຸ່ນທ່ຽງຕໍ່ໜ້າທີ່ວຽກງານ ພ້ອມທັງ ເຂົ້າໃຈແຈ້ງຕໍ່ແນວທາງປ່ຽນແປງໃໝ່ ຂອງພັກແລະລັດໃນລະບົບເສດຖະກິດຕະຫຼາດ,ແນວທາງປະຢັດມັດທະຍັດຂອງພັກ-ລັດ.

2) ເອົາໃຈໃສ່ຢ່າງຮີບດ່ວນ ແກ້ໄຂລະບົບນ້ຳ (ເຂດທີ່ຄວາມດັນນ້ຳຕ່ຳ) ແລະ ວາງທໍ່ແຈກເພື່ອ ຂະ ຫຍາຍ ລະບົບ ຈໍລະຈອນແຈກຢາຍນ້ຳຮັບໃຊ້ສັງຄົມໃຫ້ມີປະສິດທິຜົນ.
3) ສືບຕໍ່ກໍ່ສ້າງບຸກຄະລາກອນ ແຕ່ລະ ລະດັບວິຊາສະເພາະເຕັກນິກ, ຄອມພິວເຕີ ແລະ ພາສາໃຫ້ ມີຄວາມສາມາດ ໃນການດຳເນີນທຸລະກິດ ເປັນຕົ້ນພະນັກງານເຕັກນິກ, ພະນັກງານບໍລິຫານທຸ ລະກິດ, ພະນັກງານການເງິນ ແລະ ແຜນການ.
4) ຊັບຊ້ອນ ບຸກຄະລາກອນທີ່ມີຄວາມສາມາດ ໃຫ້ແຕ່ລະພະແນກການເພື່ອການດຳເນີນວຽກງານ ນັບມື້ໃຫ້ເຂັ້ມແຂງ, ປັບປຸງລະບົບການຄຸ້ມຄອງ, ລະບອບແຜນວິທີເຮັດວຽກ, ລະບົບລາຍງານ ແລະ ແກ້ໄຂບັນຫາໃຫ້ໄວ.

v. ແຜນການປີ 2003 ຂອງລັດວິສາຫະກິດນ້ຳປະປາລາວ.

1./. <u>ວຽກລວມ :</u>

- ສືບຕໍ່ປະສານສົມທົບກັບກະຊວງການເງິນ ຕາມໃບແຈ້ງການຂອງ ສ ນ ຍ ກ່ຽວກັບ ຂໍ່ານລາ

ຄານ້ຳປະປາ ຈາກ 550 ກີບ/ມ3 ມາເປັນ 750 ກີບ/ມ3.

- ພິວພັນຊອກຫາແຫ່ງທຶນ 3,5 ລ້ານໂດລາ ມາກໍ່ສ້າງໂຮງງານຜະລິດນ້ຳປະປາຢູ່ດົງໝາກຄາຍ 20.000 ມ^{3}ຕໍ່ມື້ ເພື່ອຮັບໃຊ້ປະຊາຊົນໃນກຳແພງນະຄອນວຽງຈັນ.
- **ສະເໜີຂໍ້ທຶນສຳຫຼວດອອກແບບລະບົບນ້ຳປະປາຕາມແຜນການ ຂອງກຳແພງນະຄອນ 4 ຈຸດ ຄື: ເທດສະບານເມືອງສັງທອງ,ເທດສະບານເມືອງປາກງື່ມ,ເຂດໂຕກເພີ່ງແລະເຂດຫ້ວຍຈຸ່ມ.**
- **ສືບຕໍ່ປະຕິບັດໂຄງການຫຼຸດຜ່ອນນ້ຳສູນເສັຍຕາມແຜນງານ ທີ່ LYSA ເຮັດໄວ້ແລ້ວ.**
- **ສືບຕໍ່ປະຕິບັດໂຄງການ ຮ່ວມມືກັບສາກົນ : AFD (ຝະຣັ່ງ), ອົງການ JICA , Belgigue, World Bank.**

* ວຽກງານການຜະລິດນ້ຳ ແລະ ການບໍລິການ ປີ 2003

ລ/ດ	ລາຍການ	ຫ/ໜ	ແຜນການ ປີ 2003	ໝາຍເຫດ
1	2	3	4	5
I.	<u>ພາກ ການຜະລິດ</u> -			
1	ນ້ຳຜະລິດ	ມ^3	41.814.085	
2	ນ້ຳຈຳໜ່າຍ	-"-	29.688.000	

3	% ນ້ຳເສັຍ	%	29,00	
4	ຕິດຕັ້ງນ້ຳເຂົ້າໃໝ່	ໜ່ວຍ	1.386	
5	ສ້ອມແປງ ພາຍນອກ	ບ່ອນ	3.662	
6	ລວມ ຈຳນວນໝໍ້ແທກນ້ຳ	ໜ່ວຍ	45.797	

* ວຽກງານການເງິນ ປີ 2003

ລ/ດ	ລາຍການ	ຫ/ໜ	ແຜນການ ປີ 2003	ໝາຍເຫດ
1	2	3	4	5
I.	ລາຍຮັບທຸລະກິດ	ກີບ	19.894.924.970	
II.	ລາຍຈ່າຍທຸລະກິດ	ກີບ	21.077.147.956	
III.	ກຳໄລ - ຂາດທຶນ	ກີບ	1.182.222.986	
IV.	ພັນທະງົບປະມານ	ກີບ	1.435.606.666	

VI. ຂໍ້ສະເໜີຕໍ່ຂັ້ນເທິງ

1) ສະເໜີຂັ້ນເທິງຊ່ວຍປະສານກັບອົງການທີ່ກ່ຽວຂ້ອງຕ່າງໆເພື່ອຫາວິທີແກ້ໄຂບັນຫາ ແລະ ຂໍ້ຫຍຸ້ງຍາກໃນການດຳເນີນທຸລະກິດ ເຊັ່ນ: ໜີ້ສິນຂອງລັດ, ກົດເກນລາຄາ, ການເສັຍພາສີອາກອນ.
2) ສະເໜີຂັ້ນເທິງຊ່ວຍປະສານງານກັບພາກສ່ວນທີ່ກ່ຽວຂ້ອງໃນການຊອກຫາແຫ່ງທຶນມາກໍ່ສ້າງ ລະບົບໂຮງງານຜະລິດນ້ຳປະປາເພີ້ມ.
3) ສະເໜີກົມຄຸ້ມຄອງຊັບສິນພິຈາລະນາການຫັນເງິນກູ້ມາເປັນທຶນ(ສຳລັບບ້ວງເງິນຊ່ວຍເຫຼືອ ຂອງ ຝຣັ່ງ) ຕາມທີ່ໄດ້ສະເໜີໄປແລ້ວ.

ວຽງຈັນ,ວັນທີ 25 / 03 / 2003

ຜູ້ອຳນວຍການ

ທ່ານ ດາວເພັດ ບົວພາ

- **ການແຂ່ງຮູບພາບໂປສເຕີໃນໂຮງຮຽນເດັກນ້ອຍ**

